ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 519/ຜ-ຟຟລ
ນະຄອນຫຼວງວຽງຈັນ, ວັນທີ 31 ມີນາ 2016

ໜັງສືແຈ້ງເຊີນ

ຮຽນ: ທ່ານຜູ້ຖືຮຸ້ນ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລື້ອງ: ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2015

- ອີງຕາມມະຕິຕົກລົງ ຂອງ ກອງປະຊຸມສະພາບໍລິຫານສະໄໝວິສາມັນຄັ້ງທີ 1/2016 ຂອງ ບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ, ວັນທີ 15 ກຸມພາ 2016;
- ອີງຕາມມະຕິຕົກລົງ ຂອງ ກອງປະຊຸມສະພາບໍລິຫານສະໄໝສາມັນຄັ້ງທີ 1/2016 ຂອງ ບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ, ວັນທີ 28 ມີນາ 2016.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("**ບໍລິສັດ**") ຂໍຖືເປັນກຽດຮຽນເຊີນທ່ານເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2015 ໃນວັນທີ **25 ເມສາ 2016** ເວລາ **15:00** ໂມງ (ເລີ່ມລົງທະບຽນເວລາ **13:00** ໂມງ), ທີ່ຫ້ອງປະຊຸມຊັ້ນ 1, ອາຄານສຳນັກງານໃຫຍ່ ຂອງລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ. ບໍລິສັດໄດ້ແຈ້ງວັນ, ເວລາ ແລະ ວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2015 ຜ່ານເວັບໄຊທ໌ ຂອງ ບໍລິສັດ (www.edlgen.com.la) ແລະລະບົບຂໍ້ມູນຂ່າວສານ ຂອງ ຕະຫຼາດຫຼັກຊັບລາວ (www.lsx.com.la).

ບໍລິສັດໄດ້ກຳນົດວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດລາຍຊື່ຂອງຜູ້ຖືຮຸ້ນ ທີ່ມີສິດເຂົ້າຮ່ວມກອງປະຊຸມ ສາມັນຜູ້ຖືຮຸ້ນປະຈຳປີ 2015, ໃນວັນທີ **16 ມີນາ 2016**, ຊຶ່ງໄດ້ເປີດເຜີຍໃຫ້ບັນດາທ່ານຊາບແລ້ວ.

ຫວັງວ່າທ່ານຄົງສະຫຼະເວລາອັນມີຄ່າ ເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

ດ້ວຍຄວາມນັບຖືຢ່າງສູງ,
ຜູ້ອຳນວຍການໃຫຍ່

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ບຸນອຸ້ມ ສີວັນເພັງ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

<u>ເອກະສານຄັດຕິດ:</u>

1. ວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2015.
2. ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2014.
3. ລາຍງານການເງິນປະຈຳປີ 2015.
4. ຊີວະປະຫວັດຫຍໍ້ ຂອງສະພາບໍລິຫານ.
5. ໃບມອບສັນທະ.
6. ເອກະສານ ແລະ ຫຼັກຖານທີ່ຜູ້ເຂົ້າຮ່ວມກອງປະຊຸມຕ້ອງໃຊ້ເພື່ອການສະເໜີໂຕໃນການເຂົ້າຮ່ວມກອງປະຊຸມ, ການມອບໝາຍ, ການລົງທະບຽນ ແລະ ການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນ.
7. ແຜນທີ່ ຂອງ ສະຖານທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2015.

<u>ໝາຍເຫດ</u>:

1. ຜູ້ຖືຮຸ້ນທຸກໆທ່ານ ຕ້ອງໄປຮັບເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດຕ່າງໆ ເລີ່ມແຕ່ວັນທີ **5 ເມສາ 2016**, ຢູ່ທີ່ຕະຫຼາດຫຼັກຊັບລາວ ຊັ້ນ 4 ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ, ບ້ານໂພນທັນເໜືອ, ຖະໜົນ T4, ເມືອງໄຊເຊດຖາ, ນະຄອນຫຼວງວຽງຈັນ, ໂທລະສັບ: (856-21) 454361-4, ແຟັກ: (856-21) 454361-4 ຫຼື ຕິດຕໍ່ໂດຍກົງ **ທ່ານ ສຸພອນ ປ້ອງສີງບຸນທຳ ໂທລະສັບ: (856-20) 559 74498.**
2. ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງກະລຸນານຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຄົນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມ.
3. ສຳລັບຜູ້ຖືຮຸ້ນທີ່ຈະໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສັນທະຕາມ **<u>ເອກະສານຄັດຕິດ 5</u>** ທີ່ໄດ້ຄັດຕິດມາພ້ອມນີ້ໃຫ້ຖືກຕ້ອງຄົບຖ້ວນ.
4. ສຳລັບຜູ້ຕາງໜ້າທີ່ຈະເຂົ້າຮ່ວມປະຊຸມຈະຕ້ອງນຳເອກະສານ ຫຼື ຫຼັກຖານ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມ ຕາມລາຍລະອຽດທີ່ໄດ້ລະບຸໄວ້ໃນ **<u>ເອກະສານຄັດຕິດ 6</u>** ທີ່ໄດ້ຄັດຕິດມາພ້ອມນີ້ ແລະ ສົ່ງມອບໃຫ້ປະທານກອງປະຊຸມ ແລະ/ຫຼື ຜູ່ທີ່ໄດ້ຮັບມອບໝາຍຈາກປະທານ, ຜູ້ຕາງໜ້າຈຶ່ງເຂົ້າຮ່ວມກອງປະຊຸມໄດ້.
5. ໃນກໍລະນີທີ່ຜູ້ຖືຮຸ້ນຈະມອບໝາຍໃຫ້ຜູ້ອຳນວຍການ ຂອງ ບໍລິສັດ ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສັນທະ ແລະ ໝາຍ (✔) ເພື່ອເລືອກເອົາຜູ້ອຳນວຍການ ຂອງ ບໍລິສັດທ່ານໃດທ່ານໜຶ່ງເປັນຜູ້ຕາງໜ້າ ແລະ ສົ່ງໃບມອບສັນທະດັ່ງກ່າວພ້ອມເອກະສານປະກອບສົ່ງເຖິງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ຊັ້ນ 7, **ພະແນກເລຂານຸການບໍລິສັດ**, ຖະໜົນມິດຕະພາບ ລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ.2392. ແລະ**ກະລຸນາສົ່ງເຖິງບໍລິສັດ ກ່ອນວັນທີ 25 ເມສາ 2016**.
6. ຖ້າຫາກທ່ານມີຂໍ້ສົງໄສ ຫຼື ຄຳຖາມກ່ຽວກັບການມອບສັນທະ, ກະລຸນາສອບຖາມ ທ່ານ ນາງ ໂພຄົນ ອັບໄພ ໂທ: (856-20) 545 49978, ແລະ ທ່ານ ບຸນເກີດ ໄຊຍະສອນ ໂທ: (856-20) 222 48202 ໃນໂມງລັດຖະການ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ວາລະທີ 1. ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຜ່ານມາ.

ລາຍລະອຽດ:

ລາຍງານຜົນການຈັດຕັ້ງປະຕິບັດ ມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຄັ້ງຜ່ານມາ ເພື່ອໃຫ້ຜູ້ຖືຮຸ້ນຮັບຊາບເຖິງຜົນສຳເລັດ ການຈັດຕັ້ງປະຕິບັດມະຕິກອງປະຊຸມດັ່ງກ່າວ.

ກອງປະຊຸມຜູ້ຖືຮຸ້ນປະຈຳ ປີ 2014 ຊຶ່ງປະຊຸມເມື່ອ ວັນທີ 28 ເມສາ 2015 ປະກອບມີ 9 ວາລະການປະຊຸມ, ໃນນີ້ ມີມະຕິສະເພາະ 03 ວາລະຄື: ວາລະທີ 7, ວາລະທີ 8 ແລະ ວາລະທີ 9; ຊຶ່ງສະຫຼຸບຫຍໍ້ໄດ້ ດັ່ງລຸ່ມນີ້:

1. ວາລະທີ 1,2,3,4,5,6 ແລະ 8 ແມ່ນໄດ້ຈັດຕັ້ງປະຕິບັດຕາມການເຫັນດີຂອງກອງປະຊຸມ.

2. ວາລະທີ 7: ອະນຸມັດມູນຄ່າການໂອນຊັບສິນໂຄງການເຂື່ອນໄຟຟ້ານ້ຳຄານ 2 ແລະ ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ ຈາກລັດວິສາຫະກິດໄຟຟ້າລາວ ຄື:

2.1 ໂຄງການເຂື່ອນໄຟຟ້ານ້ຳຄານ 2 ກຳລັງຕິດຕັ້ງ 130 MW, ມູນຄ່າປະມານ 336,16 ລ້ານໂດລາ;

2.2 ໂຄງການເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ ກຳລັງຕິດຕັ້ງ 88 MW, ມູນຄ່າປະມານ 226,73 ລ້ານໂດລາ.

ຊຶ່ງທັງສອງໂຄງການດັ່ງກ່າວແມ່ນໄດ້ສຳເລັດການມອບໂອນ ລະຫວ່າງ ລັດວິສາຫະກິດໄຟຟ້າລາວ ແລະ ບໍລິສັດ ໃນວັນທີ 24 ທັນວາ 2015.

3. ວາລະທີ 9: ອະນຸມັດການເພີ່ມທຶນຈົດທະບຽນ ຂອງ ບໍລິສັດ ໂດຍການອອກຮຸ້ນສາມັນໃໝ່ຈຳນວນບໍ່ເກີນ 464.783.334 ຮຸ້ນ, ມູນຄ່າກຳນົດ 4.000 ກີບຕໍ່ຮຸ້ນ ເພື່ອສະເໜີຂາຍໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ/ຫຼື ຜູ່ຖືຮຸ້ນໂດຍສະເພາະເຈາະຈົງ ແລະ/ຫຼື ຂາຍໃຫ້ແກ່ມວນຊົນທົ່ວໄປ, ຊຶ່ງຈຳນວນຮຸ້ນຂອງບໍລິສັດໄດ້ເພີ່ມຂຶ້ນຈາກ 1.226.216.765 ຮຸ້ນ ເປັນ 1.679.303.697 ຮຸ້ນ.

ຜົນການຈັດຕັ້ງປະຕິບັດການຂາຍຮຸ້ນສາມັນ ຕາມການອະນຸມັດຂອງກອງປະຊຸມສາມັນຜູ້ຖືຮຸ້ນປີ 2014 ລະຫວ່າງ ວັນທີ 28 ສິງຫາ 2015 ຫາ ວັນທີ 8 ກັນຍາ 2015, ໂດຍສະເໜີຂາຍໃຫ້ຜູ່ຖືຮຸ້ນເດີມ (Rights Offering) ຈຳນວນ 408.738.922 ຮຸ້ນ, ລາຄາ 6.000 ກີບ ເປັນເງິນປະມານ 2.452,43 ຕື້ກີບ; ແລະ ມວນຊົນທົ່ວໄປ (Public Offering) ຈຳນວນ 44.348.010 ຮຸ້ນ, ລາຄາ 6.800 ກີບ ເປັນເງິນປະມານ 301.56 ຕື້ກີບ.

ລວມທັງໝົດຂອງການອອກຮຸ້ນເພີ່ມທຶນ (RO, PO) ແມ່ນຂາຍໄດ້ຈຳນວນ 453.086.932 ຮຸ້ນ ເປັນເງິນປະມານ 2.754 ຕື້ກີບ.

ສະຫຼຸບລວມແລ້ວ, ຜົນຂອງການຂາຍຮຸ້ນເພີ່ມທຶນ (RO, PO) ຄັ້ງນີ້ ມີຜູ່ຈອງຮຸ້ນເກີນຈຳນວນ 4.066.930 ຮຸ້ນ ຫຼື ເທົ່າກັບ 23.201.580.000 ກີບ ຖືວ່າປະສົບຜົນສຳເລັດ 100%.

ຄຳເຫັນຂອງສະພາບໍລິຫານ:

ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ ຜ່ານມາ ແມ່ນລາຍງານໃຫ້ຜູ່ຖືຮຸ້ນຮັບຊາບເທົ່ານັ້ນ, ໂດຍອາລະນີ້ແມ່ນບໍ່ມີການລົງຄະແນນສຽງ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ວາລະທີ 2. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2014.

ລາຍລະອຽດ:

ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2014 ໄດ້ຈັດຂຶ້ນໃນວັນທີ **28 ເມສາ 2015**, ຊຶ່ງບໍລິສັດໄດ້ມີການບັນທຶກກອງປະຊຸມດັ່ງກ່າວມີລາຍລະອຽດໃນ **ເອກະສານຄັດຕິດ 2** ທີ່ໄດ້ຄັດຕິດມາພ້ອມນີ້.

ຄຳເຫັນຂອງສະພາບໍລິຫານ:

ບົດບັນທຶກກອງປະຊຸມ ມີຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2014, ວັນທີ 28 ເມສາ 2015.

ຄະແນນສຽງທີ່ຕ້ອງໃຊ້:

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງ ຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 3. ພິຈາລະນາ ແລະ ຮັບຮອງລາຍງານການເງິນ 6 ເດືອນຕົ້ນປີ 2015 (01/01/2015-30/06/2015) ແລະ ການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2015.

ລາຍລະອຽດ:

ອີງຕາມການມອບອຳນາດຈາກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2012 ເມື່ອວັນທີ 22 ເມສາ 2013. ການເຄື່ອນໄຫວທຸລະກິດ ຂອງ ບໍລິສັດໃນ 6 ເດືອນຕົ້ນປີ 2015 ມີກຳໄລສຸດທິປະມານ 258,56 ຕື້ກີບ, ຊຶ່ງຜູ້ກວດສອບພາຍນອກໄດ້ມີການທົບທວນແລ້ວ ແລະ ບໍລິສັດໄດ້ເປີດເຜີຍລາຍງານດັ່ງກ່າວໃນເວັບໄຊທ໌ ຂອງ ຕະຫຼາດຫຼັກຊັບລາວ ແລະ ເວັບໄຊທ໌ ຂອງ ບໍລິສັດ.

ບໍລິສັດ ໄດ້ຈ່າຍເງິນປັນຜົນ 6 ເດືອນຕົ້ນປີ 2015 ໃຫ້ຜູ້ຖືຮຸ້ນທີ່ມີລາຍຊື່ໃນປຶ້ມບັນຊີຜູ້ຖືຮຸ້ນທີ່ໄດ້ກຳນົດສິດ ຂອງ ຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ ໃນວັນທີ **9 ຕຸລາ 2015** ໃນອັດຕາ **110** ກີບຕໍ່ຮຸ້ນ, ລວມເງິນປັນຜົນທີ່ຈ່າຍທັງໝົດປະມານ **184,72** ຕື້ກີບ ແລະ ໄດ້ຈ່າຍເງິນປັນຜົນດັ່ງກ່າວໃຫ້ຜູ້ຖືຮຸ້ນ ໃນວັນທີ **16 ຕຸລາ 2015**.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງເອົາລາຍງານການເງິນ 6 ເດືອນຕົ້ນປີ 2015 ແລະ ການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2015.

ຄະແນນສຽງທີ່ຕ້ອງໃຊ້:

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 4. ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດ ຂອງບໍລິສັດ ປີ 2015 ລວມທັງລາຍງານການເງິນຂອງບໍລິສັດ ປີ 2015 ແລະ ແຜນການດຳເນີນທຸລະກິດ ຂອງ ບໍລິສັດປີ 2016.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ລາຍລະອຽດ:

I. ລາຍງານຜົນການດຳເນີນທຸລະກິດ ຂອງ ບໍລິສັດປີ 2015

ໃນ ປີ 2015, ເປັນປີທີ 5 ທີ່ບໍລິສັດ ໄດ້ດຳເນີນທຸລະກິດໃນການຜະລິດກະແສໄຟຟ້າເພື່ອຂາຍຍົກໃຫ້ລັດວິສາຫະກິດໄຟຟ້າລາວ (ຟຟລ), ໃນຂະນະດຽວກັນຕ້ອງໄດ້ປັບປຸງການຄຸ້ມຄອງບໍລິຫານພາຍໃນ ໃຫ້ສອດຄ່ອງກັບກົດໝາຍ ແລະກົດລະບຽບຕ່າງໆ ຂອງ ບໍລິສັດມະຫາຊົນ ທີ່ຈົດທະບຽນໃນຕະຫລາດຫລັກຊັບລາວ. ມາຮອດເດືອນ ກຸມພາ ປີ 2015, ບໍລິສັດໄດ້ຮັບໂອນຮຸ້ນ 15% ຂອງເຂື່ອນໄຟຟ້ານ້ຳງື່ມ 5 ຕາມຊັດສ່ວນ ຟຟລ ຖືຮຸ້ນ ເທົ່າກັບ 18 MW ແລະ ຮັບໂອນ 03 ເຂື່ອນຈາກ ຟຟລ, ເຮັດໃຫ້ມີກຳລັງຕິດຕັ້ງທັງໝົດ 1.131 MW. ນອກຈາກນີ້, ເພື່ອສືບຕໍ່ການຂະຫຍາຍທຸລະກິດ ຜ-ຟຟລ ໄດ້ອອກຮຸ້ນເພີ້ມທຶນຄັ້ງທີ 3 ໃນກາງ ປີ 2015 ເຮັດໃຫ້ມີທຶນຈົດທະບຽນ 6.717.214.788.000 ກີບ ແລະມີຮຸ້ນທັງໝົດ 1.679.303.697 ຮຸ້ນ. ຜົນການດຳເນີນທຸລະກິດໃນປີ 2015 ສາມາດສັງລວມໂດຍຫຍໍ້ໄດ້ດັ່ງນີ້:

1. ການຜະລິດ

ໃນການດຳເນີນທຸລະກິດປີ 2015 ນີ້, ກຳລັງການຜະລິດທີ່ບໍລິສັດຄຸ້ມຄອງ 100% ມີກຳລັງການຜະລິດ 619 MW (ຈຳນວນ 10 ເຂື່ອນ) ແລະກຳລັງການຜະລິດທີ່ບໍລິສັດເຂົ້າຖືຮຸ້ນໃນ 5 ເຂື່ອນຜູ້ຜະລິດໄຟຟ້າເອກະລາດ ມີກຳລັງການຜະລິດ 512 MW (ຕາມຊັດສ່ວນການຖືຮຸ້ນ), ປີ 2015 ເຂື່ອນ ທີ່ ຜ-ຟຟລ ຄຸ້ມຄອງ 100% ສາມາດຜະລິດກະແສໄຟຟ້າທັງໝົດ 1.995,12 GWh ລື່ນແຜນ 4,15% (ໃນນີ້ບໍ່ລວມການຜະລິດ 3 ເຂື່ອນທີ່ສຳເລັດການຮັບໂອນໃນວັນທີ 24 ທັນວາ 2015) ແລະ ຈາກ 5 ເຂື່ອນຜູ້ຜະລິດໄຟຟ້າເອກະລາດທີ່ບໍລິສັດເຂົ້າຖືຮຸ້ນ ສາມາດຜະລິດກະແສໄຟຟ້າທັງໝົດ 2.192,55 GWh (ຕາມຊັດສ່ວນການຖືຮຸ້ນ), ລວມການຜະລິດທັງໝົດໃນປີປະຕິບັດໄດ້ 4.187,67 GWh.

2. ລາຍຮັບ

ລາຍຮັບສ່ວນໃຫຍ່ ຂອງບໍລິສັດແມ່ນລາຍຮັບຈາກການຈຳໜ່າຍກະແສໄຟຟ້າໃຫ້ ຟຟລ ໃນລາຄາ 430,70 ກີບຕໍ່ກິໂລວັດໂມງ, ຊຶ່ງໃນປີ 2015 ຜ-ຟຟລ ສາມາດສ້າງລາຍຮັບໄດ້ 863,96 ຕື້ກີບ, (ໃນນີ້ລາຍຮັບຈາກການຈຳໜ່າຍກະແສໄຟຟ້າກວມ 98,13%) ລື່ນແຜນການທີ່ວາງໄວ້ 5,13%.

3. ລາຍຈ່າຍ

ລາຍຈ່າຍເປັນເງິນຢູ່ 509,34 ຕື້ກີບ, ຄິດເປັນ 58,95% ຂອງລາຍຮັບ ຫລື ເທົ່າກັບ 97% ຂອງ ແຜນການ.

4. ການມອບພັນທະໃຫ້ລັດ.

ບໍລິສັດໄດ້ມອບພັນທະໃຫ້ລັດຖະບານ ປະກອບດ້ວຍຄ່າພາກຫຼວງ 1% ຂອງລາຍຮັບຈາກການຂາຍກະແສໄຟຟ້າ, ອາກອນກຳໄລ 10%, ອາກອນເງິນປັນຜົນ 10% ແລະ ອາກອນລາຍໄດ້ຂອງບຸກຄົນ, ຊຶ່ງໃນ ປີ 2015 ໄດ້ມອບທັງໝົດປະມານ 184,86 ຕື້ກີບ.

5. ກຳໄລ

* ກຳໄລສຸດທິຈາກການດຳເນີນທຸລະກິດຂອງບໍລິສັດ ຈຳນວນ 354,62 ຕື້ກີບ, ຄິດເປັນ 41,05% ຂອງ ລາຍຮັບ ແລະ ຄິດເປັນ 119,51% ຂອງ ແຜນການ.
* ກຳໄລສຸດທິຈາກການລົງທຶນໃນ 5 ເຂື່ອນຜູ້ຜະລິດໄຟຟ້າເອກະລາດຈຳນວນ 286,22 ຕື້ກີບ ແລະຄິດເປັນ 55,31% ຂອງແຜນການ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ລວມກຳໄລສຸດທິໃນປີ 2015 ທັງໝົດຈຳນວນ 640,84 ຕື້ກີບ ແລະຄິດເປັນ 78,70% ຂອງ ແຜນການ.

6. ດ້ານບຸກຄະລາກອນ ແລະການພັດທະນາຊັບພະຍາກອນມະນຸດ

ຈຳນວນພະນັກງານຂອງບໍລິສັດມີທັງໝົດ 478 ຄົນ, ໃນນີ້ຍິງ 89 ຄົນ, ໃນປີ 2015 ໄດ້ສົ່ງໄປຝຶກອົບຮົມໄລຍະສັ້ນພາຍໃນ ແລະຕ່າງປະເທດ ມີທັງໝົດ 379 ເຖ້ຽວຄົນ.

7. ກິດຈະກຳສຳຄັນພາຍໃນປີ ດ້ານສັງຄົມ ແລະ ສິ່ງແວດລ້ອມ

1) ໄດ້ຈັດກິດຈະກຳການປູກຕົ້ນໄມ້ ແລະປ່ອຍປາ ພ້ອມທັງມອບເຄື່ອງນຸ່ງ ແລະ ອຸປະກອນການຮຽນໃຫ້ແກ່ນ້ອງນັກຮຽນ ທີ່ເຂື່ອນໄຟຟ້ານ້ຳສະນາ, ບ້ານ ນາຊູ, ເມືອງ ກາສີ, ແຂວງ ວຽງຈັນ.
2) ໄດ້ສົມທົບກັບກອງຄຸ້ມຄອງປ່າສະຫງວນພູເຂົາຄວາຍ ໃນການລາດຕະເວນ, ສຳຫລວດປ່າ, ລົງໃຫ້ຄວາມຮູ້ປຸກຈິດສຳນຶກປະຊາຊົນທີ່ຢູ່ລຽບພູເຂົາຄວາຍຈຳນວນ 20 ກວ່າບ້ານແລະປູກຕົ້ນໄມ້ໃນເຂດປ່າທີ່ຊຸດໂຊມຈຳນວນ 3.000 ກວ່າຕົ້ນ ໃນພື້ນທີ່ 3 ເຮັກຕາ ແລະ ປ່ອຍປາລົງ ເຂື່ອນໄຟຟ້ານ້ຳມັງ3.
3) ເຂື່ອນໄຟຟ້າເຊເສັດ 1-2 ແມ່ນໄດ້ຈັດຕັ້ງປະຕິບັດການປັກຫລັກໝາຍຂອບເຂດເພື່ອປ້ອງກັນການບຸກລຸກປ່າ ບໍລິເວນຫ້ວຍຕະປຸງ ເພື່ອເປັນການປົກປັກຮັກສາປ່າຕົ້ນນ້ຳ ທີ່ໄຫລເຂົ້າສູ່ອ່າງເຊເສັດ 2.
4) ເຂື່ອນໄຟຟ້ານ້ຳງື່ມ 1 ແມ່ນໄດ້ເອົາໃຈໃສ່ປະຕິບັດ ຕາມມາດຕະຖານ ISO 14001:2008 EMS.
5) ເຂື່ອນໄຟຟ້ານ້ຳເລີກ ແລະເຂື່ອນໄຟຟ້ານ້ຳຊອງ ໄດ້ຮ່ວມກັບປະຊາຊົນອ້ອມຂ້າງເຂື່ອນໄດ້ສືບຕໍ່ສ້ອມແປງ ແລະບຳລຸງຮັກສາລະບົບນ້ຳໃຊ້ ໃຫ້ຢູ່ໃນສະພາບໃຊ້ງານຢ່າງປົກກະຕິ.
6) ເຂື່ອນໄຟຟ້ານ້ຳມັງ 3 ແມ່ນໄດ້ຊ່ວຍເຫລືອປະຊາຊົນ ໂດຍການປະກອບສ່ວນເງິນປະມານ 6 ຕື້ກີບ ປູຢາງ 2 ຊັ້ນ ເສັ້ນທາງເຂົ້າບ້ານພູເຂົາຄວາຍ ທີ່ໄດ້ຮັບຄວາມເສຍຫາຍຈາກໄພນ້ຳຖ້ວມ ແລະຕິດຕັ້ງລະບົບນ້ຳບາດານ ອີກຈຳນວນໜຶ່ງ ເພື່ອໃຫ້ຮອງຮັບການເພີ່ມຂຶ້ນຂອງປະຊາຊົນ ໃຫ້ໄດ້ນຳໃຊ້ນ້ຳໄດ້ຢ່າງພຽງພໍ.
7) ບໍລິສັດໄດ້ຈ່າຍຄ່າຊົດເຊີຍກ່ຽວກັບສິ່ງແວດລ້ອມໃຫ້ແກ່ໂຄງການເຂື່ອນໄຟຟ້ານ້ຳຄານສອງຈຳນວນ 7,04 ລ້ານໂດລາ ແລະໂຄງການເຂື່ອນໄຟຟ້າຫວ້ຍລຳພັນໃຫຍ່ປະມານ 7,92 ລ້ານໂດລາ.
8) ນອກຈາກນີ້ບໍລິສັດແມ່ນຍັງໄດ້ມອບເງິນຈຳນວນໜຶ່ງ ໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງທີ່ເຫັນວ່າຈຳເປັນກ່ຽວກັບການພັດທະນາການສຶກສາ-ກິລາ ຂອງນ້ອງນັກຮຽນ, ການຊ່ວຍຜູ້ປະສົບໄພທຳມະຊາດ.

8. ການລົງທຶນ ແລະການພັດທະນາທຸລະກິດ

8.1 ການລົງທຶນຮ່ວມມືກັບນັກລົງທຶນພາຍນອກ

1. ໄດ້ສຳເລັດການເຊັນສັນຍາຮ່ວມຮຸ້ນກັບ ບໍລິສັດ Sok Corporation ໃນການພັດທະນາໂຄງການ ໂຄງການເຂື່ອນໄຟຟ້ານ້ຳພູນກັບ ກຳລັງຕິດຕັ້ງ 45 MW ທີ່ ແຂວງໄຊຍະບູລີ.
2. ໄດ້ສຳເລັດການສ້າງຕັ້ງ ບໍລິສັດນ້ຳບິພາວເວີ ຈຳກັດ ມີກຳລັງຕິດຕັ້ງ 130 MW ທີ່ ແຂວງເຊກອງ.
3. ໄດ້ສຳເລັດການສ້າງຕັ້ງ ບໍລິສັດ EDL-Gen Solar Power Company Ltd ມີກຳລັງຕິດຕັ້ງ 100MW.

8.2 ການລົງທຶນຮ່ວມກັບລັດວິສາຫະກິດໄຟຟ້າລາວ (ຟຟລ)

1. ໄດ້ສຳເລັດການເຊັນບົດບັນທຶກຄວາມເຂົ້າໃຈໂຄງການເຂື່ອນໄຟຟ້ານ້ຳອູ 2, 5 ແລະ 6 ກັບ ຟຟລ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

2. ໄດ້ສຳເລັດການເຊັນສັນຍາໂອນຊັບສິນ ແລະ ການເຈລະຈາລາຄາໄຟຟ້າ ຂອງໂຄງການເຂື່ອນໄຟຟ້ານ້ຳສະນາ, ນ້ຳຄານ 2 ແລະ ຫ້ວຍລຳພັນໃຫ່ຍ ກັບ ລັດວິສາຫະກິດໄຟຟ້າລາວ.
3. ໄດ້ສຳເລັດການເຊັນບົດບັນທຶກຄວາມເຂົ້າໃຈການໂອນຊັບສິນໂຄງການ ກັບ ຟຟລ ທີ່ນຳໃຊ້ແຫລ່ງທຶນຈາກການອອກຮຸ້ນສາມັນເພີ່ມທຶນຄັ້ງທີ 3 ປະກອບມີດັ່ງນີ້:

- ໂຄງການທີ່ ຟຟລ ລົງທຶນ 100%
  1) ໂຄງການເຂື່ອນໄຟຟ້ານ້ຳຈຽນ 1
  2) ໂຄງການເຂື່ອນໄຟຟ້ານ້ຳຫົນບູນ
  3) ໂຄງການເຂື່ອນໄຟຟ້າເຊເສັດ 3
  4) ໂຄງການເຂື່ອນໄຟຟ້ານ້ຳງື່ມ 1 ExT DFE
  5) ໂຄງການເຂື່ອນໄຟຟ້ານ້ຳງື່ມ 1 ExT Unit 6
- ໂຄງການທີ່ ຟຟລ ເຂົ້າຖືຮຸ້ນໃນເຂື່ອນຜູ້ຜະລິດໄຟຟ້າເອກະລາດ (IPPs)
  1) ໂຄງການເຂື່ອນໄຟຟ້ານ້ຳງຽບ 2
  2) ໂຄງການເຂື່ອນໄຟຟ້ານ້ຳແບ່ງ
  3) ໂຄງການເຂື່ອນໄຟຟ້າເຊຊະໝານ 3
  4) ໂຄງການເຂື່ອນໄຟຟ້ານ້ຳລິກ 1
  5) ໂຄງການເຂື່ອນໄຟຟ້ານ້ຳມັງ 1
  6) ໂຄງການເຂື່ອນໄຟຟ້ານ້ຳທາ 1

9. ການລະດົມທຶນ ຄັ້ງທີ 3

- ການອອກຮຸ້ນເພີ່ມທຶນ.
  - ສະເໜີຂາຍໃຫ້ຜູ້ຖືຮຸ້ນເດີມ (Rights Offering (RO)) ຈຳນວນ 408.738.922 ຮຸ້ນ, ລາຄາ 6.000 ກີບ, ລວມເປັນເງິນປະມານ 2.452,43 ຕື້ກີບ.
  - ສະເໜີຂາຍໃຫ້ມວນຊົນທົ່ວໄປ (Public Offering (PO)) ຈຳນວນ 44.348.101 ຮຸ້ນ ລາຄາ 6.800 ກີບ, ລວມເງິນປະມານ 301,57 ຕື້ກີບ.
    ລວມທັງໝົດ 2.754 ຕື້ກີບ.

II. ແຜນການດຳເນີນທຸລະກິດ ຂອງ ບໍລິສັດ 2016

ໂດຍອີງຕາມນະໂຍບາຍອັນຊັດເຈນຂອງ ຜ-ຟຟລ ໃນການຕອບສະໜອງເງິນປັນຜົນຢ່າງສົມເຫດສົມຜົນໃຫ້ຜູ້ຖືຮຸ້ນ, ທັງເຮັດໃຫ້ການດຳເນີນທຸລະກິດການຜະລິດກະແສໄຟຟ້າມີຄວາມໝັ້ນຄົງຢ່າງຕໍ່ເນື່ອງ, ໃນປີ 2016, ບໍລິສັດຈຶ່ງໄດ້ວາງແຜນການດຳເນີນທຸລະກິດດ້ວຍຕົວເລກຄາດໝາຍທີ່ອາດມີຄວາມເປັນໄປໄດ້ໃນເບື້ອງລາຍຮັບ ແລະ ໄດ້ວາງຕົວເລກຄາດໝາຍຢ່າງຮັດກຸມໃນເບື້ອງລາຍຈ່າຍ. ສ່ວນກະແສເງິນສົດ ໄດ້ຈັດສັນເງິນທີ່ມີ ແລະຄາດວ່າຈະເກີດຂຶ້ນຕາມບູລິມະສິດຄວາມຈຳເປັນໃນການລົງທຶນ ແລະນຳໃຊ້, ຊຶ່ງທັງໝົດເພື່ອເຮັດໃຫ້ຕົວເລກດຸ່ນດ່ຽງກະແສເງິນສົດມີຄວາມຄ່ອງຕົວຢ່າງເໝາະສົມ.

ດັ່ງນັ້ນ, ຕົວເລກແຜນການດຳເນີນທຸລະກິດປີ 2016 ແລະຕົວເລກກະແສເງິນສົດຈຶ່ງມີຕົວເລກຄາດໝາຍ ແລະໜ້າວຽກແຕ່ລະດ້ານດັ່ງລຸ່ມນີ້.

1. ການດຳເນີນທຸລະກິດປີ 2016

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ການດຳເນີນທຸລະກິດ ປີ 2016 ນີ້, ດ້ວຍກຳລັງການຜະລິດທັງໝົດ 1.131 MW, ໃນນີ້, ເຂື່ອນ ທີ່ບໍລິສັດຄຸ້ມຄອງ 100% ມີກຳລັງການຜະລິດ 619 MW ແລະ ຈາກ 5 ເຂື່ອນຜູ້ຜະລິດໄຟຟ້າເອກະລາດ ທີ່ບໍລິສັດເຂົ້າຖືຮຸ້ນ ມີກຳລັງການຜະລິດ 512 MW (ຕາມຊັດສ່ວນການຖືຮຸ້ນ).

ການຜະລິດ, ຈາກເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ 100% ຄາດວ່າຈະຜະລິດກະແສໄຟຟ້າໄດ້ປະມານ 2.911,42 GWh ແລະ ຈາກ 5 ເຂື່ອນຜູ້ຜະລິດໄຟຟ້າເອກະລາດທີ່ ຜ-ຟຟລ ເຂົ້າຖືຮຸ້ນ ຈະຜະລິດໄດ້ປະມານ 2.314,49 GWh (ຕາມຊັດສ່ວນການຖືຮຸ້ນ), ລວມການຜະລິດທັງໝົດໃນປີຈະເປັນປະມານ 5.225,92 GWh.

ສ່ວນການຈຳໜ່າຍ, ຈາກບັນດາເຂື່ອນທີ່ບໍລິສັດຄຸ້ມຄອງຄາດວ່າຈະໄດ້ປະມານ 2.869,70 GWh ແລະ ຈາກ 5ເຂື່ອນຜູ້ຜະລິດໄຟຟ້າເອກະລາດ ທີ່ບໍລິສັດເຂົ້າຖືຮຸ້ນ ຄາດວ່າຈະໄດ້ປະມານ 2.314,49 GWh (ຕາມຊັດສ່ວນການຖືຮຸ້ນ), ລວມການຈຳໜ່າຍທັງໝົດຈະມີຢູ່ປະມານ 5.184,20 GWh.

2. ການລົງທຶນ ແລະ ການພັດທະນາທຸລະກິດ.

ໃນປີ 2016, ບໍລິສັດຈະສືບຕໍ່ລົງທຶນໃນເຂື່ອນຕ່າງໆ ໂດຍສະເພາະບັນດາເຂື່ອນທີ່ໄດ້ລະບຸໄວ້ໜັງສືຊວນຊື້ຂອງຂອງບໍລິສັດ, ລວມທັງເຂື່ອນໃໝ່ອື່ນໆ ເຊັ່ນ:

- **ໂຄງການທີ່ ຟຟລ ລົງທຶນ.**

1. ເຂື່ອນໄຟຟ້ານ້ຳງື່ມ 1 ພາກຂະຫຍາຍ 2 ໂຄງການ, ກຳລັງຕິດຕັ້ງ 40 MW ແລະ 80 MW

- **ໂຄງການທີ່ ຟຟລ ເຂົ້າຖືຮຸ້ນ**

1. ເຂື່ອນໄຟຟ້ານ້ຳລອງ ມີກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 20% ເທົ່າກັບ 1 MW
2. ເຂື່ອນໄຟຟ້ານ້ຳອູ 2 ມີກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 15% ເທົ່າກັບ 18 MW
3. ເຂື່ອນໄຟຟ້ານ້ຳອູ 5 ມີກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 15% ເທົ່າກັບ 36 MW
4. ເຂື່ອນໄຟຟ້ານ້ຳອູ 6 ມີກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 15% ເທົ່າກັບ 27 MW
5. ເຂື່ອນໄຟຟ້ານ້ຳງຽບ 2 ມີກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 10% ເທົ່າກັບ 18 MW
6. ເຂື່ອນໄຟຟ້ານ້ຳແບ່ງ ມີກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 20% ເທົ່າກັບ 7 MW
7. ເຂື່ອນໄຟຟ້ານ້ຳມັງ 1 ມີກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 10% ເທົ່າກັບ 6 MW
8. ເຂື່ອນໄຟຟ້ານ້ຳທາ 1 ມີກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 20% ເທົ່າກັບ 34 MW
9. ເຂື່ອນໄຟຟ້ານ້ຳລິກ 1 ມີກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 10% ເທົ່າກັບ 6 MW
10. ເຂື່ອນໄຟຟ້າເຊຂະໝານ 3 ມີກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 15% ເທົ່າກັບ 38 MW

- **ໂຄງການທີ່ບໍລິສັດຈະລົງທຶນ ແລະເຂົ້າຮ່ວມທຶນ**

ນອກຈາກໂຄງການທີ່ບໍລິສັດຈະຮັບໂອນເຂື່ອນທີ່ ຟຟລ ລົງທຶນ ແລະ ຟຟລ ເຂົ້າຖືຮຸ້ນແລ້ວ, ບໍລິສັດຍັງມີແຜນການຈະລົງທຶນເອງ ແລະເຂົ້າຮ່ວມຖືຮຸ້ນກັບບັນດາເອກະຊົນ ເຊັ່ນ:

1. ໂຄງການເຂື່ອນໄຟຟ້າເຊເສັດ 2 ພາກຂະຫຍາຍ ກຳລັງຕິດຕັ້ງເພີ່ມ 10 MW
2. ໂຄງການເຂື່ອນໄຟຟ້າເຊລະບໍ ພາກຂະຫຍາຍ ກຳລັງຕິດຕັ້ງເພີ່ມ 8 MW
3. ເຂື່ອນໄຟຟ້າຫ້ວຍລຳພັນຕອນລຸ່ມ ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 60% ເທົ່າກັບ 9 MW
4. ເຂື່ອນໄຟຟ້ານ້ຳກາລະບາຍ 1, 2 ແລະ 3 ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 80% ເທົ່າກັບ 31 MW
5. ເຂື່ອນໄຟຟ້ານ້ຳບີ 1, 2 ແລະ 3 ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 80% ເທົ່າກັບ 108 MW
6. ເຂື່ອນໄຟຟ້ານ້ຳພຸນ ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 51 % ເທົ່າກັບ 22,95 MW
7. ເຂື່ອນໄຟຟ້ານ້ຳເທີນ 1 ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 15% ເທົ່າກັບ 97,5 MW

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

8. ເຂື່ອນໄຟຟ້າພະລັງງານແສງອາທິດ ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 60% ເທົ່າກັບ 19,2 MW

- **ວຽກສ້ອມແປງອຸປະກອນການຜະລິດ**
  1. ສ້ອມແປງໃຫຍ່ ເຄື່ອງຈັກເບີ 3 ແລະ 4 ເຂື່ອນໄຟຟ້າເຊເສັດ 1
  2. ສ້ອມແປງໃຫຍ່ ເຄື່ອງຈັກເບີ 1 ເຂື່ອນໄຟຟ້ານ້ຳມັງ 3

ສ່ວນການພັດທະນາແຫລ່ງລາຍຮັບອື່ນໆນອກຈາກການຂາຍກະແສໄຟຟ້າ, ບໍລິສັດຈະໄດ້ສືບຕໍ່ຂະຫຍາຍຕະຫລາດໃນການບໍລິການການຄຸ້ມຄອງ ແລະບຳລຸງຮັກສາເຂື່ອນລວມທັງການໃຫ້ບໍລິການມະນຸດກິບ ແລະການບໍລິການອື່ນໆ ທີ່ໄດ້ດຳເນີນຢູ່ໃຫ້ມີປະສິດທິຜົນຂຶ້ນຕື່ມ.

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາຮັບຮອງເອົາບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປີ 2015 ລວມທັງລາຍງານການເງິນຂອງບໍລິສັດປີ 2015 ແລະ ແຜນການດຳເນີນທຸລະກິດຂອງບໍລິສັດປີ 2016.

<u>ຄະແນນສຽງທີ່ຕ້ອງໃຊ້:</u>

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງ ຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 5. ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2015 (01/07/2015-31/12/2015).

<u>ລາຍລະອຽດ:</u>

ອີງຕາມກົດລະບຽບ ຂອງ ບໍລິສັດ, ບໍລິສັດມີນະໂຍບາຍໃນການແບ່ງເງິນປັນຜົນໃນອັດຕາສ່ວນບໍ່ຫຼຸດ 50 ສ່ວນຮ້ອຍຂອງກຳໄລສຸດທິ, ພາຍຫຼັງຫັກສ້າງເປັນຄັງສຳຮອງຕາມລະບຽບການ ແລະຄັງສຳຮອງອື່ນໆ (ຖ້າມີ) ໃນແຕ່ລະປີ ຊຶ່ງການແບ່ງເງິນປັນຜົນຈະຂຶ້ນຢູ່ກັບສະພາບເສດຖະກິດ ແລະແຜນການລົງທຶນຕ່າງໆໃນອະນາຄົດ.

ບໍລິສັດມີກຳໄລສຸດທິຈາກຜົນການດຳເນີນທຸລະກິດ ຂອງ ບໍລິສັດ 6 ເດືອນທ້າຍປີ 2015 ເປັນຈຳນວນທັງໝົດ **382,27 ຕື້ກີບ**. ສະເໜີກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ຂອງ ບໍລິສັດ 6 ເດືອນທ້າຍປີ 2015 ພາຍຫຼັງການຫັກເປັນຄັງສຳຮອງຕາມລະບຽບການ, ຄັງສຳຮອງເພື່ອການສ້ອມແປງເຂື່ອນ ແລະ ເພື່ອຂະຫຍາຍທຸລະກິດ ແລະ ຄັງສຳຮອງເພື່ອໃຫ້ບຳເນັດພະນັກງານ, ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນໃນວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນໃນວັນທີ **19 ເມສາ 2016** ໃນອັດຕາ 150 ກີບຕໍ່ຮຸ້ນ, ລວມເປັນເງິນປັນຜົນຈ່າຍທັງໝົດ **251,89 ຕື້ກີບ** ແລະ ກຳນົດຈ່າຍເງິນປັນຜົນໃນວັນທີ **6 ພຶດສະພາ 2016.** ຂໍ້ມູນການຈ່າຍເງິນປັນຜົນ 6 ເດືອນທ້າຍປີ 2014 ທຽບກັບການຈ່າຍເງິນປັນຜົນ 6 ເດືອນທ້າຍປີ 2015, ມີດັ່ງລຸ່ມນີ້:

ລາຍລະອຽດ	6 ເດືອນທ້າຍປີ 2015	6 ເດືອນທ້າຍປີ 2014
ກຳໄລສຸດທິ	382,27 ຕື້ກີບ	580,70 ຕື້ກີບ
ຈຳນວນຮຸ້ນ	1.679.303.697 ຮຸ້ນ	1.226.216.765 ຮຸ້ນ
ເງິນປັນຜົນຕໍ່ຮຸ້ນ	150 ກີບ	268 ກີບ
ລວມເງິນປັນຜົນທີ່ຈ່າຍທັງໝົດ	251,89 ຕື້ກີບ	328,63 ຕື້ກີບ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ຄຳເຫັນຂອງສະພາບໍລິຫານ:

ການສະເໜີຈ່າຍເງິນປັນຜົນ ຂອງ ບໍລິສັດ ແມ່ນຖືກຕ້ອງຕາມນະໂຍບາຍການຈ່າຍເງິນປັນຜົນຂອງ ບໍລິສັດ ແລະ ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາອະນຸມັດການ ຈ່າຍເງິນປັນຜົນດັ່ງກ່າວ.

ຄະແນນສຽງທີ່ຕ້ອງໃຊ້:

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງ ໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 6. ພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ ກວດສອບບັນຊີພາຍນອກ ປີ 2016.

ລາຍລະອຽດ:

ໂດຍອີງຕາມກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ມາດຕາ 154 ວ່າດ້ວຍສິດ ແລະ ໜ້າທີ່ ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ແລະ ອີງຕາມລະບຽບວ່າດ້ວຍການບັນຊີ ແລະ ການກວດສອບວຽກງານຫຼັກຊັບ ສະບັບເລກທີ 001/ຄຄຊ, ລົງວັນທີ 07 ເມສາ 2015 ຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ມາດຕາ 38 ໄດ້ກຳນົດ ໄວ້ໃຫ້ບໍລິສັດກວດສອບມີອາຍຸການ 5 ປີ, ຊຶ່ງໄລຍະຜ່ານມາແມ່ນ ບໍລິສັດ Price Waterhouse Coopers (Lao) Limited (PWC) ເປັນຜູ້ດຳເນີນການກວດສອບໃຫ້ແກ່ບໍລິສັດ ຈາກປີ 2011-2015.

ດັ່ງນັ້ນໃນປີ 2016 ບໍລິສັດ ສະເໜີແຕ່ງຕັ້ງຜູ້ກວດສອບບັນຊີບໍລິສັດໃໝ່ຄື : ບໍລິສັດ Klynveld Peat Marwick Goerdeler (KPMG) ເປັນຜູ້ກວດສອບບັນຊີພາຍນອກ ຂອງບໍລິສັດສຳລັບປີ 2016, ເນື່ອງຈາກ ວ່າ ບໍລິສັດ KPMG ເປັນຜູ້ຊະນະການປະກວດລາຄາ ແລະເປັນບໍລິສັດກວດສອບບັນຊີທີ່ຢູ່ໃນລາຍການຮັບຮອງຈາກ ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ, ເປັນຜູ້ກວດສອບບັນຊີ, ເພື່ອການທົບທວນ ແລະ ການກວດສອບບັນຊີ ຂອງບໍລິສັດ; ໂດຍຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກສຳລັບປີ 2016 ເປັນຈຳນວນເງິນ 82.000 ໂດລາ ສະຫະລັດ.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນອະນຸມັດການແຕ່ງຕັ້ງຜູ້ ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກດັ່ງກ່າວ.

ຄະແນນສຽງທີ່ຕ້ອງໃຊ້:

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງ ໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 7. ພິຈາລະນາ ແລະ ອະນຸມັດການຄັດເລືອກສະພາບໍລິຫານຊຸດໃໝ່ ແທນສະພາບໍລິຫານຊຸດເກົ່າ ທີ່ຄົບ ອາຍຸການ.

ລາຍລະອຽດ:

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ອີງຕາມກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ມາດຕາ 154 ວ່າດ້ວຍສິດ ແລະ ໜ້າທີ່ ຂອງ ກອງປະຊຸມສາມັນຜູ້ຖືຮຸ້ນ.

ອີງຕາມບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2013 ສະບັບລົງວັນທີ 5 ພຶດສະພາ 2014, ວາລະທີ 6, ວັກທີ 4 ໄດ້ລະບຸໄວ້ວ່າ ອາຍຸການຂອງບັນດາຜູ້ອຳນວຍການຂອງບໍລິສັດທັງໝົດ ມີກຳນົດ 2 ປີ ໂດຍເລີ່ມ ນັບແຕ່ວັນທີກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2013 ເປັນຕົ້ນໄປ. ຊຶ່ງມາຮອດປັດຈຸບັນ ເຫັນວ່າບັນດາຜູ້ອຳນວຍການ ດັ່ງກ່າວ ໄດ້ໝົດອາຍຸການດຳລົງຕຳແໜ່ງເປັນຜູ້ອຳນວຍການຂອງບໍລິສັດແລ້ວ ຊຶ່ງປະກອບມີລາຍຊື່ດັ່ງລຸ່ມນີ້:

1.	ທ່ານ ດຣ. ຄຳມະນີ ອິນທິລາດ	ປະທານ
2.	ທ່ານ ສີສະຫວາດ ທິຣະວົງ	ຮອງປະທານ
3.	ທ່ານ ບຸນອູ້ມ ສີວັນເພັງ	ຜູ້ອຳນວຍການ
4.	ທ່ານ ນາງ ລັດຕະນາ ປະທຸມວັນ	ຜູ້ອຳນວຍການ
5.	ທ່ານ ບຸນມາ ມະນີວົງ	ຜູ້ອຳນວຍການ
6.	ທ່ານ ນາງ ອານິດາ ສະຫວັດດີ	ຜູ້ອຳນວຍການ
7.	ທ່ານ ສີຈາດ ບຸດຊາກົດຕິລາດ	ຜູ້ອຳນວຍການ
8.	ທ່ານ ຣສ.ດຣ. ກອງສີ ແສງມະນີ	ຜູ້ອຳນວຍການອິດສະຫຼະ
9.	ທ່ານ ສຈ.ດຣ. ຄຳລືຊາ ນອນສະຫວັນ	ຜູ້ອຳນວຍການອິດສະຫຼະ
10.	ທ່ານ ຣສ. ຄຳເພີຍ ພົມມະຈັນ	ຜູ້ອຳນວຍການອິດສະຫຼະ

ຊີວະປະຫວັດຫຍໍ້ ຂອງ ຜູ້ອຳນວຍການແຕ່ລະທ່ານໄດ້ມີລາຍລະອຽດໃນເອກະສານຄັດຕິດ ທີ່ໄດ້ ຄັດຕິດພ້ອມກັບໜັງສືແຈ້ງເຊີນ.

ເນື່ອງຈາກວ່າ ບັນດາຜູ້ອຳນວຍການດັ່ງກ່າວຂ້າງເທິງນັ້ນ ແມ່ນມີຄຸນວຸດທິການສຶກສາສູງ, ມີຄວາມ ຮູ້ຄວາມສາມາດ, ມີປະສົບການໃນການດຳເນີນທຸລະກິດ ແລະ ການປະຕິບັດວຽກງານຜ່ານມາ ແຕ່ລະທ່ານແມ່ນໄດ້ມີ ຄວາມເອົາໃຈໃສ່ຕໍ່ບໍລິສັດ ແລະ ເຂົ້າຮ່ວມກອງປະຊຸມສະພາບໍລິຫານຢ່າງເປັນປົກກະຕິ.

ບໍລິສັດ ສະເໜີບັນດາທ່ານທີ່ມີລາຍຊື່ດັ່ງກ່າວຂ້າງເທິງນັ້ນ ເພື່ອສືບຕໍ່ປະຕິບັດໜ້າທີ່ເປັນຜູ້ອຳນວຍ ການ ຂອງ ບໍລິສັດອີກວາລະໜຶ່ງ, ໂດຍເລີ່ມນັບອາຍຸການແຕ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2015 ເປັນຕົ້ນໄປ.

ສະເໜີກຳນົດລາຍຊື່ຜູ້ອຳນວຍການ ທີ່ມີອຳນາດລົງລາຍເຊັນຜູກພັນບໍລິສັດ ດັ່ງນີ້:

1. ປະທານສະພາບໍລິຫານ ຫຼື ຮອງປະທານສະພາບໍລິຫານ ຫຼື ຜູ້ອຳນວຍການໃຫຍ່ ເປັນຜູ້ລົງ ລາຍເຊັນ ແລະ ປະທັບກາບໍລິສັດແຕ່ພຽງຜູ້ດຽວ; ຫລື
2. ໃຫ້ຜູ້ອຳນວຍການອື່ນສອງທ່ານ ລົງລາຍເຊັນຮ່ວມກັນ ແລະ ປະທັບກາບໍລິສັດ.

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາອະນຸມັດ ການຄັດເລືອກສະພາບໍລິຫານຊຸດໃໝ່ ແທນ ສະພາບໍລິຫານຊຸດເກົ່າທີ່ຄົບອາຍຸການ ແລະ ອຳ ນາດການລົງລາຍເຊັນຜູກ ພັນບໍລິສັດ.

<u>ຄະແນນສຽງທີ່ຕ້ອງໃຊ້:</u>

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 8. ການຮັບໂອນບັນດາໂຄງການເຂື່ອນໄຟຟ້າ ຈາກລັດວິສາຫະກິດໄຟຟ້າລາວ ທີ່ນຳໃຊ້ແຫຼ່ງທຶນຈາກການອອກຮຸ້ນສາມັນເພີ່ມທຶນ ຄັ້ງທີ 3.

ລາຍລະອຽດ:

ເພື່ອເຮັດໃຫ້ການດຳເນີນທຸລະກິດຂອງບໍລິສັດ ບັນລຸເປົ້າໝາຍຕາມແຜນການທີ່ໄດ້ກຳນົດໄວ້. ສະ ເ ໜີກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາມູນຄ່າການຮັບໂອນບັນດາໂຄງການເຂື່ອນໄຟຟ້າຈາກລັດວິສາຫະກິດໄຟຟ້າລາວ (ຟຟລ) ໂດຍນຳໃຊ້ແຫ່ລງທຶນຈາກການອອກຮຸ້ນສາມັນເພີ່ມທຶນຄັ້ງທີ 3, ມີລາຍລະອຽດດັ່ງນີ້:

I. ການຮັບໂອນຊັບສິນໂຄງການຈາກ ຟຟລ ມີທັງໝົດ 5 ໂຄງການຄື:

1. ໂຄງການນ້ຳຈຽນ ຕັ້ງຢູ່ເມືອງທ່າໂທມ ແຂວງ ໄຊສົມບູນມີກຳລັງຕິດຕັ້ງ 104 MW ສາມາດຜະລິດໄຟຟ້າສະເລ່ຍ 448 GWh ຕໍ່ປີ, ຄວາມຄືບໜ້າການກໍ່ສ້າງຂອງໂຄງການ ຮອດວັນທີ 15/03/2016 ແມ່ນ 70,96 % ແລະ ຄາດວ່າຈະ COD ປີ 2018. ມູນຄ່າໃນການຮັບໂອນປະມານ 316,87 ລ້ານໂດລາ ສຫລ ແລະ ບໍລິສັດຍັງຈະໄດ້ຮັບພາລະໃນການຊຳລະດອກເບ້ຍຕາມສັນຍາເງິນກູ້ຂອງໂຄງການນຳອີກ.

2. ໂຄງການເຂື່ອນໄຟຟ້າ ນ້ຳຫົ່ນບຸນ ຕັ້ງຢູ່ເມືອງຄູນຄຳ ແຂວງ ຄຳມ່ວນ ມີກຳລັງຕິດຕັ້ງ 30 MW ສາມາດຜະລິດໄຟຟ້າສະເລ່ຍ 155 GWh ຕໍ່ປີ ຄວາມຄືບໜ້າການກໍ່ສ້າງຂອງໂຄງການ ຮອດວັນທີ 15/03/2016 ແມ່ນ 67,31 % ແລະ ຄາດວ່າຈະ COD ໃນເດືອນ 03/2017. ມູນຄ່າໃນການຮັບໂອນປະມານ 112,87 ລ້ານໂດລາ ສຫລ ແລະ ບໍລິສັດຍັງຈະໄດ້ຮັບພາລະໃນການຊຳລະດອກເບ້ຍຕາມສັນຍາເງິນກູ້ຂອງໂຄງການນຳອີກ.

3. ໂຄງການເຂື່ອນໄຟຟ້າເຊເສັດ 3 ຕັ້ງຢູ່ເມືອງ ປາກຊ່ອງ ແຂວງ ຈຳປາສັກ ມີກຳລັງຕິດຕັ້ງ 23 MW ສາມາດຜະລິດໄຟຟ້າສະເລ່ຍ 82 GWh ຕໍ່ປີ ຄວາມຄືບໜ້າການກໍ່ສ້າງຂອງໂຄງການ ຮອດວັນທີ 15/03/2016 ແມ່ນ ປະຕິບັດໄດ້ 84,42% ແລະ ຄາດວ່າຈະ COD ໃນເດືອນ 06 /2016. ມູນຄ່າໃນການຮັບໂອນ ປະມານ 63,90 ລ້ານໂດລາ ສຫລ ແລະ ບໍລິສັດຍັງຈະໄດ້ຮັບພາລະໃນການຊຳລະດອກເບ້ຍຕາມສັນຍາເງິນກູ້ຂອງໂຄງການນຳອີກ.

4.ໂຄງການເຂື່ອນໄຟຟ້ານ້ຳງື່ມ-1 ພາກຂະຫຍາຍຈັກເບີ 7&8 (ແຫຼ່ງເງິນກູ້ ສປ ຈີນ) ຕັ້ງຢູ່ເມືອງແກ້ວອຸດົມ ແຂວງວຽງຈັນ ມີກຳລັງຕິດຕັ້ງ 80 MW ສາມາດຜະລິດໄຟຟ້າສະເລ່ຍ 120 GWh ຕໍ່ປີ ຄວາມຄືບໜ້າການກໍ່ສ້າງຂອງ ໂຄງການ ຮອດວັນທີ 15/03/2016 ແມ່ນ 31 % ແລະ ຄາດວ່າຈະ COD ໃນ 2018. ມູນຄ່າໃນການຮັບໂອນປະມານ 177,07 ລ້ານໂດລາ ສຫລ ແລະບໍລິສັດຍັງຈະໄດ້ຮັບພາລະໃນການຊຳລະດອກເບ້ຍຕາມສັນຍາເງິນກູ້ຂອງໂຄງການນຳອີກ.

5.ໂຄງການເຂື່ອນໄຟຟ້ານ້ຳງື່ມ-1 ພາກຂະຫຍາຍຈັກເບີ 6 (ແຫຼ່ງເງິນກູ້ JICA) ຕັ້ງຢູ່ເມືອງ ແກ້ວອຸດົມ ແຂວງວຽງຈັນ ມີກຳລັງຕິດຕັ້ງ 40 MW ສາມາດຜະລິດໄຟຟ້າສະເລ່ຍ 60 GWh ຕໍ່ປີ ຄວາມຄືບໜ້າການກໍ່ສ້າງຂອງ ໂຄງການ ຮອດວັນທີ 15/03/2016 ໄດ້ສຳເລັດ ການປະມູນເອກະສານເງື່ອນໄຂ ແລະ ຄຸນນະພາບຜູ້ຮັບເໝົາວຽກງານ ພາກທີ 2 ວຽກຕິດຕັ້ງອຸປະກອນໄຟຟ້າ/ອຸປະກອນກົນຈັກແລະ ຄາດວ່າຈະ COD ໃນ2019. ມູນຄ່າໃນການຮັບໂອນ ປະມານ 81,43 ລ້ານໂດລາ ສຫລ ແລະ ບໍລິສັດຍັງຈະໄດ້ຮັບພາລະໃນການຊຳລະດອກເບ້ຍຕາມສັນຍາເງິນກູ້ຂອງ ໂຄງການນຳອີກ.

II ການຮັບໂອນຮຸ້ນ ຂອງໂຄງການ IPP ທີ່ ຟຟລ ເຂົ້າຖືຮຸ້ນ ມີທັງໝົດ 6 ໂຄງການຄື:

1. ໂຄງການເຂື່ອນໄຟຟ້ານ້ຳງຽບ 2 ຕັ້ງຢູ່ເມືອງຜາໄຊ ແຂວງຊຽງຂວາງ ກຳລັງຕິດຕັ້ງທັງໝົດ 180 MW, ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 10% ເທົ່າກັບ 18 MW ໄດ້ດຳເນີນການຜະລິດ ເດືອນ 12/2015. ມູນຄ່າ ໃນການຮັບໂອນ ປະມານ 13,74 ລ້ານໂດລາ ສຫລ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

2. ໂຄງການເຂື່ອນໄຟຟ້ານ້ຳແບ່ງ ຕັ້ງຢູ່ເມືອງອຸດົມໄຊ ກຳລັງຕິດຕັ້ງ 34 MW ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 20% ເທົ່າກັບ 7 MW ຄາດວ່າຈະດຳເນີນການຜະລິດ ໃນກາງ ປີ 2016. ມູນຄ່າໃນການຮັບໂອນ ປະມານ 5,19 ລ້ານໂດລາ ສຫລ.

3. ໂຄງການເຂື່ອນໄຟຟ້າເຊຊະໝານ 3 ຕັ້ງຢູ່ເມືອງດາກຈຶງ ແຂວງເຊກອງ ກຳລັງຕິດຕັ້ງທັງໝົດ 250 MW, ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 15% ເທົ່າກັບ 38 MW ໄດ້ດຳເນີນການຜະລິດ ປີ 2015. ມູນຄ່າໃນການຮັບໂອນ ປະມານ 28,62 ລ້ານໂດລາ ສຫລ.

4. ໂຄງການເຂື່ອນໄຟຟ້ານ້ຳລີກ 1 ຕັ້ງຢູ່ເມືອງຫີນເຫີບ ແຂວງວຽງຈັນ ກຳລັງຕິດຕັ້ງທັງໝົດ 60 MW, ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 10% ເທົ່າກັບ 6 MW ຄາດວ່າຈະດຳເນີນການຜະລິດ ປີ 2017. ມູນຄ່າໃນການຮັບໂອນ ປະມານ 4,58 ລ້ານໂດລາ ສຫລ.

5. ໂຄງການເຂື່ອນໄຟຟ້ານ້ຳມັງ 1 ຕັ້ງຢູ່ ເມືອງລ້ອງຊານ ແຂວງໄຊສົມບູນ ກຳລັງຕິດຕັ້ງທັງໝົດ 64 MW, ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 10% ເທົ່າກັບ 6 MW ຄາດວ່າຈະດຳເນີນການຜະລິດ ປີ 2017. ມູນຄ່າໃນການຮັບໂອນ ປະມານ 4,88 ລ້ານໂດລາ ສຫລ.

6. ໂຄງການເຂື່ອນໄຟຟ້ານ້ຳທາ 1 ຕັ້ງຢູ່ເມືອງຜາອຸດົມ ແຂວງບໍ່ແກ້ວ ກຳລັງຕິດຕັ້ງທັງໝົດ 168 MW, ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 20% ເທົ່າກັບ 34 MW ຄາດວ່າຈະດຳເນີນການຜະລິດ ປີ 2018. ມູນຄ່າໃນການຮັບໂອນ ປະມານ 25,64 ລ້ານໂດລາ ສຫລ.

ເຖິງຢ່າງໃດກໍດີ, ການໂອນຊັບສິນ ແລະ ຮຸ້ນຂອງບັນດາໂຄງການດັ່ງກ່າວໂດຍ ຟຟລ ແລະ ການຮັບໂອນຊັບສິນ ແລະ ຮຸ້ນໃນໂຄງການດັ່ງກ່າວໂດຍບໍລິສັດ ຈະເກີດຂຶ້ນກໍ່ຕໍ່ເມື່ອຄູ່ສັນຍາໄດ້ປະຕິບັດຕາມເງື່ອນໄຂພາຍໃຕ້ ບົດບັນທຶກຄວາມເຂົ້າໃຈ ເຊິ່ງທັງສອງຝ່າຍໄດ້ສ້າງຂຶ້ນໃຫ້ສຳເລັດຄົບຖ້ວນ, ໂດຍມີເງື່ອນໄຂທີ່ສຳຄັນ ໃນບົດບັນທຶກຄວາມເຂົ້າໃຈ ຂອງໂຄງການດັ່ງກ່າວດັ່ງນີ້:

(1) ຄູ່ສັນຍາແຕ່ລະຝ່າຍ ໄດ້ຮັບການອະນຸມັດທີ່ຈຳເປັນທັງໝົດຈາກສະພາບໍລິຫານ ເພື່ອໃຫ້ສາມາດ ໂອນ ຫຼື ຮັບໂອນຊັບສິນທີ່ຈະໂອນຕາມຂໍ້ກຳນົດ ຂອງ ບົດບັນທຶກຄວາມເຂົ້າໃຈ ແລະ ສັນຍາ ໂອນຊັບສິນ;

(2) ຄູ່ສັນຍາແຕ່ລະຝ່າຍໄດ້ຮັບຄວາມຍິນຍອມ ຫຼື ການອະນຸມັດທີ່ຈຳເປັນທັງໝົດຈາກໜ່ວຍງານ ລັດ ເພື່ອໃຫ້ສາມາດໂອນ ຫຼື ຮັບໂອນຊັບສິນທີ່ຈະໂອນຕາມຂໍ້ກຳນົດຂອງບົດບັນທຶກຄວາມ ເຂົ້າໃຈ ແລະ ສັນຍາໂອນຊັບສິນ;

(3) ຟຟລ ໄດ້ຮັບຄວາມຍິນຍອມ ຫຼື ການອະນຸມັດທີ່ຈຳເປັນທັງໝົດຈາກບັນດາບຸກຄົນອື່ນທີ່ກ່ຽວ ຂ້ອງ, ເຈົ້າໜີ້ (ຖ້າມີ), ເພື່ອໃຫ້ສາມາດໂອນຊັບສິນທີ່ຈະໂອນຕາມຂໍ້ກຳນົດ ຂອງ ບົດບັນທຶກ ຄວາມເຂົ້າໃຈ ແລະ ສັນຍາໂອນຊັບສິນ; ແລະ

(4) ບໍລິສັດໄດ້ຮັບຄວາມເຫັນດີຈາກກອງປະຊຸມຜູ້ຖືຮຸ້ນຕາມທີ່ຈຳເປັນເພື່ອໃຫ້ສາມາດຮັບໂອນຊັບ ສິນທີ່ຈະໂອນຕາມຂໍ້ກຳນົດ ຂອງ ບົດບັນທຶກຄວາມເຂົ້າໃຈ ແລະ ສັນຍາໂອນຊັບສິນ.

ແລະ ສະເໜີກອງປະຊຸມມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ຂອງ ບໍລິສັດ ແລະ/ຫຼື ບຸກຄົນທີ່ໄດ້ ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການຕິດຕໍ່, ເຈລະຈາ, ກຳນົດເງື່ອນໄຂ, ມູນຄ່າການໂອນ ແລະ ລາຍລະອຽດທີ່ກ່ຽວຂ້ອງ, ດັດແກ້, ເພີ້ມເຕີມ, ຕົກລົງ, ລົງນາມ, ສົ່ງມອບເອກະສານ ແລະ/ຫຼື ສັນຍາຕ່າງໆ ທີ່ກ່ຽວ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ຂ້ອງກັບການຮັບໂອນຊັບສິນ ແລະ ຮຸ້ນໃນໂຄງການດັ່ງກ່າວຂ້າງເທິງນີ້ ແລະ/ຫຼື ບຸກຄົນທີ່ກ່ຽວຂ້ອງກັບການຮັບໂອນຊັບສິນດັ່ງກ່າວ, ຊຶ່ງລວມເຖິງແຕ່ບໍ່ຈຳກັດພຽງ ສັນຍາໂອນຊັບສິນ ລວມເຖິງແຕ່ບໍ່ຈຳກັດພຽງ ການເປີດເຜີຍຂໍ້ມູນໃດໜຶ່ງ ທີ່ກ່ຽວຂ້ອງ, ການຕິດຕໍ່, ການໃຫ້ຂໍ້ຄວາມ, ຂໍ້ມູນແກ່ໜ່ວຍງານລັດ ແລະ/ຫຼື ອົງການລັດຕ່າງໆທີ່ກ່ຽວຂ້ອງ ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວ ຕະຫຼອດການກະກຽມ, ດັດແກ້, ເພີ່ມເຕີມ ແລະ/ຫຼື ປ່ຽນແປງຂໍ້ມູນທີ່ກ່ຽວຂ້ອງທີ່ຈະຕ້ອງເປີດເຜີຍ ລວມເຖິງການດຳເນີນການໃດໜຶ່ງທີ່ຈຳເປັນ ແລະ ກ່ຽວເນື່ອງກັບການດຳເນີນການດັ່ງກ່າວໄດ້ທຸກຢ່າງຈົນສຳເລັດ, ລວມທັງໃຫ້ມີອຳນາດໃນການແຕ່ງຕັ້ງ ແລະ/ຫຼື ຖອດຖອນຜູ້ຮັບມອບອຳນາດຕໍ່ໃນການດຳເນີນການໃດໜຶ່ງດັ່ງກ່າວຂ້າງເທິງນີ້ທຸກປະການ.

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ອະນຸມັດ ມູນຄ່າການຮັບໂອນຊັບສິນ ແລະ ຮຸ້ນບັນດາໂຄງການເຂື່ອນໄຟຟ້າດັ່ງກ່າວ ແລະ ການມອບອຳນາດດັ່ງກ່າວຂ້າງເທິງທຸກປະການ.

<u>ຄະແນນສຽງທີ່ຕ້ອງໃຊ້:</u>

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຂອງຜູ້ຖືຮຸ້ນ ຫຼື ຜູ່ຕາງໜ້າຜູ້ຖືຮຸ້ນຢ່າງໜ້ອຍ ສອງສ່ວນສາມ (2/3) ຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະ ມີຮຸ້ນລວມກັນຢ່າງໜ້ອຍ 80 ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ວາລະທີ 9: ການຮັບໂອນບັນດາໂຄງການເຂື່ອນໄຟຟ້າ ຈາກລັດວິສາຫະກິດ ທີ່ນຳໃຊ້ແຫລ່ງທຶນ ຈາກການອອກຮຸ້ນກູ້ສະກຸນເງິນບາດ ຢູ່ຕະຫຼາດຫຼັກຊັບແຫ່ງປະເທດໄທ.

<u>ລາຍລະອຽດ:</u>

ເພື່ອຂະຫຍາຍການລົງທຶນ ແລະ ການດຳເນີນທຸລະກິດຂອງບໍລິສັດ ບັນລຸເປົ້າໝາຍທີ່ວາງໄວ້ ແລະ ເພື່ອແໝໃສ່ສ້າງຄວາມຮັ່ງມີ ໃຫ້ແກ່ຜູ້ຖືຮຸ້ນຢ່າງຕໍ່ເນື່ອງ ແລະ ນັບມື້ນັບເພີ່ມຂຶ້ນ. ບໍລິສັດສະເໜີກອງປະຊຸມພິຈາລະນາ ມູນຄ່າການຮັບໂອນຊັບສິນ ແລະ ຮຸ້ນ ຈາກລັດວິສາຫະກິດໄຟຟ້າລາວ, ຊຶ່ງມີລາຍລະອຽດດັ່ງນີ້:

I. ການຮັບໂອນຊັບສິນໂຄງການຈາກ ຟຟລ ມີທັງໝົດ 4 ໂຄງການຄື:

ໃນນີ້ 3 ໂຄງການຄື: ໂຄງການເຂື່ອນໄຟຟ້ານ້ຳຄານ 2, ໂຄງການເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ ແລະ ໂຄງການເຂື່ອນໄຟຟ້ານ້ຳສະນາ ແມ່ນໄດ້ສຳເລັດການຮັບໂອນຊັບສິນທັງໝົດຈາກລັດວິສາຫະກິດໄຟຟ້າລາວ ເມື່ອວັນທີ 24 ທັນວາ 2015, ຍັງເຫລືອແຕ່ໂຄງການເຂື່ອນໄຟຟ້ານ້ຳຄານ 3, ມີລາຍລະອຽດດັ່ງນີ້:

1. ໂຄງການເຂື່ອນໄຟຟ້ານ້ຳຄານ 3

ໂຄງການເຂື່ອນໄຟຟ້ານ້ຳຄານ 3 ຕັ້ງຢູ່ເມືອງຊຽງເງິນ ແຂວງຫຼວງພະບາງ, ມີກຳລັງຕິດຕັ້ງທັງໝົດ 60 MW ສາມາດຜະລິດໄຟຟ້າສະເລ່ຍ 240 GWh ຕໍ່ປີ, ຄວາມຄືບໜ້າການກໍ່ສ້າງໂຄງການຮອດວັນທີ 15/03/2016 ປະຕິບັດໄດ້ 95,15% ແລະ ຄາດວ່າຈະສຳເລັດການກໍ່ສ້າງໃນເດືອນ 6/2016. ມູນຄ່າໃນການຮັບໂອນປະມານ 163,30 ລ້ານໂດລາ ສຫລ ແລະບໍລິສັດຍັງຈະໄດ້ຮັບພາລະໃນການຊຳລະດອກເບ້ຍຕາມສັນຍາເງິນກູ້ຂອງໂຄງການນຳອີກ.

II. ການຮັບໂອນຮຸ້ນ ຂອງ ໂຄງການ IPP ທີ່ ຟຟລ ເຂົ້າຖືຮຸ້ນ ມີທັງໝົດ 5 ໂຄງການດັ່ງລຸ່ມນີ້:

1. ໂຄງການເຂື່ອນໄຟຟ້ານ້ຳງື່ມ 5 (ການຮັບໂອນສຳເລັດແລ້ວ)

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

2. **ໂຄງການ ເຂື່ອນໄຟຟ້ານ້ຳອູ 2**: ໂຄງການເຂື່ອນໄຟຟ້ານ້ຳອູ 2 ຕັ້ງຢູ່ເມືອງງອຍ ແລະ ເມືອງນ້ຳບາກ ແຂວງຫຼວງພະບາງ ມີກຳລັງຕິດຕັ້ງທັງໝົດ 120 MW, ກາລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 15% ເທົ່າກັບ 18 MW. ຜະລິດໄຟຟ້າສະເລ່ຍ 502 GWh ຕໍ່ປີ, ມູນຄ່າໃນການຮັບໂອນປະມານ 14,1 ລ້ານໂດລາ ສຫລ.
3. **ໂຄງການເຂື່ອນໄຟຟ້ານ້ຳອູ 5:** ໂຄງການນ້ຳອູ 5 ຕັ້ງຢູ່ເມືອງສຳພັນ ແຂວງຜົ້ງສາລີ ມີກຳລັງຕິດຕັ້ງທັງໝົດ 240 MW, ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 15% ເທົ່າກັບ 36 MW, ຜະລິດໄຟຟ້າສະເລ່ຍ 1.049 GWh ຕໍ່ປີ. ມູນຄ່າໃນການຮັບໂອນປະມານ 15,6 ລ້ານໂດລາ ສຫລ.
4. **ໂຄງການເຂື່ອນໄຟຟ້ານ້ຳອູ 6**: ໂຄງການເຂື່ອນໄຟຟ້າ ນ້ຳອູ 6 ຕັ້ງຢູ່ເມືອງຜົ້ງສາລີ ແຂວງຜົ້ງສາລີ ມີກຳລັງຕິດຕັ້ງທັງໝົດ 180 MW, ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 15% ເທົ່າກັບ 27 MW ຜະລິດໄຟຟ້າສະເລ່ຍ 358 GWh ຕໍ່ປີ. ມູນຄ່າໃນການຮັບໂອນ ປະມານ 16,8 ລ້ານໂດລາ ສຫລ.
5. **ໂຄງການເຂື່ອນໄຟຟ້ານ້ຳລອງ:** ໂຄງການເຂື່ອນໄຟຟ້ານ້ຳລອງ ຕັ້ງຢູ່ເມືອງລອງ ແຂວງຫລວງນ້ຳທາ ມີກຳລັງຕິດຕັ້ງທັງໝົດ 5 MW, ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 20% ເທົ່າກັບ 1 MW. ຜະລິດໄຟຟ້າສະເລ່ຍ 37 GWh ຕໍ່ປີ. ມູນຄ່າໃນການຮັບໂອນປະມານ 0,65 ລ້ານໂດລາ ສຫລ.

ເຖິງຢ່າງໃດກໍດີ, ການໂອນຊັບສິນ ແລະ ຮຸ້ນ ຂອງບັນດາໂຄງການດັ່ງກ່າວໂດຍ ຟຟລ ແລະ ການຮັບໂອນຊັບສິນ ແລະ ຮຸ້ນໃນໂຄງການດັ່ງກ່າວໂດຍບໍລິສັດ ຈະເກີດຂຶ້ນກໍ່ຕໍ່ເມື່ອຄູ່ສັນຍາໄດ້ປະຕິບັດຕາມເງື່ອນໄຂພາຍໃຕ້ ບົດບັນທຶກຄວາມເຂົ້າໃຈ ເຊິ່ງທັງສອງຝ່າຍໄດ້ສ້າງຂຶ້ນໃຫ້ສຳເລັດຄົບຖ້ວນ, ໂດຍມີເງື່ອນໄຂທີ່ສຳຄັນ ໃນບົດບັນທຶກຄວາມເຂົ້າໃຈ ຂອງໂຄງການດັ່ງກ່າວ ດັ່ງນີ້:

(1) ຄູ່ສັນຍາແຕ່ລະຝ່າຍ ໄດ້ຮັບການອະນຸມັດທີ່ຈຳເປັນທັງໝົດຈາກສະພາບໍລິຫານ ເພື່ອໃຫ້ສາມາດ ໂອນ ຫຼື ຮັບໂອນຊັບສິນທີ່ຈະໂອນຕາມຂໍ້ກຳນົດ ຂອງ ບົດບັນທຶກຄວາມເຂົ້າໃຈ ແລະ ສັນຍາ ໂອນຊັບສິນ;

(2) ຄູ່ສັນຍາແຕ່ລະຝ່າຍໄດ້ຮັບຄວາມຍິນຍອມ ຫຼື ການອະນຸມັດທີ່ຈຳເປັນທັງໝົດຈາກໜ່ວຍງານ ລັດ ເພື່ອໃຫ້ສາມາດໂອນ ຫຼື ຮັບໂອນຊັບສິນທີ່ຈະໂອນຕາມຂໍ້ກຳນົດຂອງບົດບັນທຶກຄວາມ ເຂົ້າໃຈ ແລະ ສັນຍາໂອນຊັບສິນ;

(3) ຟຟລ ໄດ້ຮັບຄວາມຍິນຍອມ ຫຼື ການອະນຸມັດທີ່ຈຳເປັນທັງໝົດຈາກບັນດາບຸກຄົນອື່ນທີ່ກ່ຽວ ຂ້ອງ, ເຈົ້າໜີ້ (ຖ້າມີ) ເພື່ອໃຫ້ສາມາດໂອນຊັບສິນທີ່ຈະໂອນຕາມຂໍ້ກຳນົດຂອງບົດບັນທຶກ ຄວາມເຂົ້າໃຈ ແລະ ສັນຍາໂອນຊັບສິນ; ແລະ

(4) ບໍລິສັດໄດ້ຮັບຄວາມເຫັນດີຈາກກອງປະຊຸມຜູ້ຖືຮຸ້ນຕາມທີ່ຈຳເປັນເພື່ອໃຫ້ສາມາດຮັບໂອນຊັບ ສິນທີ່ຈະໂອນຕາມຂໍ້ກຳນົດຂອງບົດບັນທຶກຄວາມເຂົ້າໃຈ ແລະ ສັນຍາໂອນຊັບສິນ.

ແລະ ສະເໜີກອງປະຊຸມມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ຂອງບໍລິສັດ ແລະ/ຫຼື ບຸກຄົນທີ່ໄດ້ຮັບ ມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການຕິດຕໍ່, ເຈລະຈາ, ກຳນົດເງື່ອນໄຂ, ມູນຄ່າການໂອນ ແລະ ລາຍ ລະອຽດທີ່ກ່ຽວຂ້ອງ, ດັດແກ້, ເພີ້ມເຕີມ, ຕົກລົງ, ລົງນາມ, ສົ່ງມອບເອກະສານ ແລະ/ຫຼື ສັນຍາຕ່າງໆ ທີ່ກ່ຽວຂ້ອງ ກັບການຮັບໂອນຊັບສິນ ແລະ ຮຸ້ນໃນໂຄງການດັ່ງກ່າວຂ້າງເທິງນີ້ ແລະ/ຫຼື ບຸກຄົນທີ່ກ່ຽວຂ້ອງກັບການຮັບໂອນຊັບສິນ ດັ່ງກ່າວ, ຊຶ່ງລວມເຖິງແຕ່ບໍ່ຈຳກັດພຽງ ສັນຍາໂອນຊັບສິນ ລວມເຖິງແຕ່ບໍ່ຈຳກັດພຽງ ການເປີດເຜີຍຂໍ້ມູນໃດໜຶ່ງທີ່ ກ່ຽວຂ້ອງ, ການຕິດຕໍ່, ການໃຫ້ຂໍ້ຄວາມ, ຂໍ້ມູນແກ່ໜ່ວຍງານລັດ ແລະ/ຫຼື ອົງການລັດຕ່າງໆທີ່ກ່ຽວຂ້ອງ ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວ ຕະຫຼອດການກະກຽມ, ດັດແກ້, ເພີ້ມເຕີມ ແລະ/ຫຼື

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ປ່ຽນແປງຂໍ້ມູນທີ່ກ່ຽວຂ້ອງທີ່ຈະຕ້ອງເປີດເຜີຍ ລວມເຖິງການດຳເນີນການໃດໜຶ່ງທີ່ຈຳເປັນ ແລະ ກ່ຽວເນື່ອງກັບການດຳເນີນການດັ່ງກ່າວໄດ້ທຸກຢ່າງຈົນສຳເລັດ, ລວມທັງໃຫ້ມີອຳນາດໃນການແຕ່ງຕັ້ງ ແລະ/ຫຼື ຖອດຖອນຜູ້ຮັບມອບອຳນາດຕໍ່ໃນການດຳເນີນການໃດໜຶ່ງດັ່ງກ່າວຂ້າງເທິງນີ້ທຸກປະການ.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາອະນຸມັດມູນຄ່າການຮັບໂອນຊັບສິນ ແລະ ຮຸ້ນ ຂອງ ບັນດາໂຄງການເຂື່ອນໄຟຟ້າດັ່ງກ່າວ ແລະ ການມອບອຳນາດຂ້າງເທິງທຸກປະການ.

ຄະແນນສຽງທີ່ຕ້ອງໃຊ້:

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຂອງຜູ້ຖືຮຸ້ນ ຫລື ຜູ້ຕາງໜ້າຜູ້ຖືຮຸ້ນຢ່າງໜ້ອຍ ສອງສ່ວນສາມ (2/3) ຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະມີຮຸ້ນລວມກັນຢ່າງໜ້ອຍ 80 ສ່ວນຮ້ອຍ ຂອງ ຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2014, ວັນທີ 28 ເມສາ 2015

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
ກອງປະຊຸມສາມັນຜູ້ຖືຮຸ້ນ

ນະຄອນຫຼວງວຽງຈັນ, ວັນທີ 08/05/2015

<u>ບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2014</u>
<u>ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ</u>

ປະຊຸມເມື່ອວັນທີ 28 ເມສາ 2015 ເວລາ 15:00 ໂມງ ທີ່ຫ້ອງປະຊຸມໃຫຍ່ຊັ້ນ 1, ສຳນັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂດຍ ທ່ານ ດຣ. ຄຳມະນີ ອິນທິລາດ ປະທານສະພາບໍລິຫານ ເປັນປະທານກອງປະຊຸມ. ກອງປະຊຸມມີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມດ້ວຍຕົນເອງຈຳນວນ **194** ທ່ານ ແລະ ມອບສັນທະຈຳນວນ **473** ທ່ານ, ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ **667** ທ່ານ ຖືຮຸ້ນລວມກັນທັງໝົດ **1.102.208.701** ຮຸ້ນ ເທົ່າກັບ **89,89** ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ, ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ລະບຽບການ ຂອງບໍລິສັດ.

ປະທານກອງປະຊຸມ ໄດ້ແນະນຳຜູ້ອຳນວຍການແຕ່ລະທ່ານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງທີ່ເຂົ້າຮ່ວມປະຊຸມດັ່ງນີ້:

1. **ທ່ານ ດຣ. ຄຳມະນີ ອິນທິລາດ**	ຕຳແໜ່ງ:	ປະທານສະພາບໍລິຫານ, ລັດຖະມົນຕີຊ່ວຍວ່າການ ກະຊວງພະລັງງານ ແລະ ບໍ່ແຮ່;
2. **ທ່ານ ສີສະຫວາດ ທິຣະວົງ**	ຕຳແໜ່ງ:	ຮອງປະທານສະພາບໍລິຫານບໍລິສັດ, ຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ;
3. **ທ່ານ ບຸນອຸ້ມ ສີວັນເພັງ**	ຕຳແໜ່ງ:	ຜູ້ອຳນວຍການ, ຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ;
4. **ທ່ານ ນາງ ລັດຕະນາ ປະທຸມວັນ**	ຕຳແໜ່ງ:	ຜູ້ອຳນວຍການ, ຮອງຜູ້ອຳນວຍການໃຫຍ່ ສາຍງານຜະລິດ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ;
5. **ທ່ານ ບຸນມາ ມະນີວົງ**	ຕຳແໜ່ງ:	ຜູ້ອຳນວຍການ, ຮອງຜູ້ອຳນວຍການໃຫ່ຍ ລັດວິສາຫະກິດໄຟຟ້າລາວ;
6. **ທ່ານ ນາງ ວານິດາ ສະຫວັດດີ**	ຕຳແໜ່ງ:	ຜູ້ອຳນວຍການ, ຮອງຫົວໜ້າກົມຮ່ວມມືສາກົນ ກະຊວງການເງິນ;
7. **ທ່ານ ສີຈາດ ບຸດຊາກົດຕິລາດ**	ຕຳແໜ່ງ:	ຜູ້ອຳນວຍການ, ຮອງຫົວໜ້າກົມທຸລະກິດພະລັງງານ ກະຊວງພະລັງງານ ແລະບໍ່ແຮ່;

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

8. **ທ່ານ ຮສ. ດຣ. ກອງສີ ແສງມະນີ** ຕຳແໜ່ງ: ຜູ່ອຳນວຍການອົດສະຫຼະ, ລັດຖະມົນຕີຊ່ວຍວ່າການ ກະຊວງສຶກສາທິການ ແລະ ກິລາ.

9. **ທ່ານ ສຈ. ດຣ. ຄຳລືຊາ ນວນສະຫວັນ** ຕຳແໜ່ງ: ຜູ່ອຳນວຍການອົດສະຫຼະ, ຫົວໜ້າກົມ ກິດຈະການນັກສຶກສາ, ກະຊວງສຶກສາທິການ ແລະ ກິລາ;

10. **ທ່ານ ຮສ. ຄຳເພັຍ ພົມມະຈັນ** ຕຳແໜ່ງ: ຜູ່ອຳນວຍການອົດສະຫຼະ, ວ່າການຫົວໜ້າຫ້ອງການການເງິນ, ມະຫາວິທະຍາໄລແຫ່ງຊາດ;

ພ້ອມດຽວກັນນີ້, ກໍຍັງມີ ທ່ານຜູ່ຕາງໜ້າຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຜູ່ຕາງໜ້າຈາກຕະຫຼາດຫຼັກຊັບລາວ, ຮອງຜູ່ອຳນວຍການໃຫຍ່ ສາຍການເງິນ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ຮອງຜູ່ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ, ຕາງໜ້າຜູ່ກວດສອບບັນຊີພາຍນອກ ບໍລິສັດ ພຣາຍວໍເຕີເຮົ້າສ໌ ກຣຸບເປີ (ລາວ) ຈຳກັດ, ຄະນະກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ, ຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ່ຖືຮຸ້ນ ເຂົ້າຮ່ວມກອງປະຊຸມ ແລະ ຄະນະກຳມະການກວດສອບພາຍໃນຂອງບໍລິສັດເຂົ້າຮ່ວມກອງປະຊຸມຄັ້ງນີ້.

ຫລັງຈາກນັ້ນ ປະທານກອງປະຊຸມ ໄດ້ມອບໃຫ້ ທ່ານ ບຸນອຸ້ມ ສີວັນເພັງ ຜູ່ອຳນວຍການໃຫຍ່ ຂອງບໍລິສັດ ອະທິບາຍກ່ຽວກັບວິທີການລົງຄະແນນສຽງໃຫ້ທີ່ປະຊຸມຊາບ ແລະ ລາຍງານແຕ່ລະວາລະຂອງການປະຊຸມ, ຊຶ່ງລາຍລະອຽດມີດັ່ງນີ້:

1. ການລົງຄະແນນສຽງ:

- ທ່ານຜູ່ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່ ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.
- ໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ ປະທານຈະຖາມກອງປະຊຸມວ່າ ມີຜູ່ຖືຮຸ້ນທ່ານໃດບໍ່ເຫັນດີ.
  * ຖ້າຫາກມີຜູ່ຖືຮຸ້ນທ່ານໃດບໍ່ເຫັນດີ ໃຫ້ທ່ານນັ້ນກາເຄື່ອງໝາຍໃສ່ຊ່ອງການລົງມະຕິບໍ່ເຫັນດີ ໃນບັດລົງຄະແນນ ທີ່ເຈົ້າໜ້າທີ່ໄດ້ແຈກຢາຍໃຫ້ກ່ອນເຂົ້າປະຊຸມ ແລະ ຍົກບັດທີ່ກາເຄື່ອງໝາຍນັ້ນຂຶ້ນສູງໆ ຈົນກວ່າຈະມີເຈົ້າໜ້າທີ່ມາເກັບບັດລົງຄະແນນ ເພື່ອນຳໄປກວດນັບຄະແນນສຽງໃນວາລະນັ້ນໆ ແລະ ສຳລັບຜູ່ຖືຮຸ້ນທີ່ບໍ່ໄດ້ຍົກບັດ ຖືວ່າຜູ່ຖືຮຸ້ນທ່ານນັ້ນ ມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ.
  * ຖ້າຫາກບໍ່ມີຜູ່ຖືຮຸ້ນທ່ານໃດຍົກບັດ ໃຫ້ຖືວ່າເຫັນດີ ຕາມເລື່ອງທີ່ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ, ຍົກເວັ້ນກໍລະນີທີ່ຜູ່ຖືຮຸ້ນໄດ້ເຮັດເຄື່ອງໝາຍ ໃນໃບມອບສັນທະໄວ້ຢ່າງຈະແຈ້ງແລ້ວວ່າ ຈະລົງມະຕິບໍ່ເຫັນດີ, ຊຶ່ງບໍລິສັດໄດ້ບັນທຶກຄະແນນສຽງທີ່ບໍ່ເຫັນດີດັ່ງກ່າວນັ້ນໄວ້ແລ້ວ.
- ສຳລັບຜູ່ຖືຮຸ້ນທີ່ມອບໝາຍໃຫ້ຜູ່ຕາງໜ້າເຂົ້າຮ່ວມປະຊຸມແທນ ແລະ ໃຫ້ຜູ່ຕາງໜ້າລົງຄະແນນສຽງ ຕາມຄວາມຕ້ອງການຂອງຜູ່ຖືຮຸ້ນ ຕາມທີ່ຜູ່ຖືຮຸ້ນໄດ້ລະບຸໄວ້ໃນໃບມອບສັນທະນັ້ນ, ບໍລິສັດໄດ້ນຳເອົາການລົງຄະແນນສຽງຕາມທີ່ຜູ່ຖືຮຸ້ນລະບຸໄວ້ໃນໃບມອບສັນທະດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າ ໃນເວລາທີ່ຜູ່ຕາງໜ້າລົງ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ທະບຽນເປັນທີ່ຮຽບຮ້ອຍແລ້ວ ເພື່ອເປັນຄວາມສະດວກໃຫ້ແກ່ຜູ້ຕາງໜ້າ ໂດຍຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງ ໃນບັດລົງຄະແນນໃນກອງປະຊຸມຕື່ມອີກ.

2. ການນັບຜົນການລົງຄະແນນສຽງ

- ການນັບຜົນການລົງຄະແນນສຽງໃນແຕ່ລະວາລະ ຈະນັບຄະແນນສຽງຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຂອງ ຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເຂົ້າຮ່ວມ ປະຊຸມທີ່ອອກສຽງບໍ່ເຫັນດີ ມາຫັກອອກຈາກຈຳນວນຮຸ້ນທັງໝົດ ຂອງ ຜູ້ທີ່ມາເຂົ້າຮ່ວມປະຊຸມ ແລະ ລົງ ຄະແນນສຽງໃນແຕ່ລະວາລະ.
- ປະທານກອງປະຊຸມຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະ ໃຫ້ກອງປະຊຸມຮັບຊາບ ຫຼັງຈາກ ການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງ ໂດຍຈະແຍກຄະແນນສຽງເຫັນດີ ແລະ ບໍ່ເຫັນດີ/ງົດ ອອກສຽງ ແລະ ເປັນຈຳນວນຈັກສ່ວນຮ້ອຍ, ກໍລະນີມີຜູ້ຖືຮຸ້ນທີ່ສົ່ງບັດລົງຄະແນນບໍ່ເຫັນດີ ພາຍຫຼັງຈາກທີ່ປະ ທານໄດ້ປະກາດ ໃຫ້ກອງປະຊຸມຮັບຊາບຜົນການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ, ບໍລິ ສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວ ມານັບເປັນຄະແນນສຽງຕື່ມອີກ.

ເວລາຕໍ່ມາ, ທ່ານຜູ້ອຳນວຍການໃຫຍ່ ໄດ້ເລີ່ມເຂົ້າສູ່ວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳ ປີ 2014 ໂດຍໄດ້ລາຍງານເປັນແຕ່ລະວາລະ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

ວາລະທີ 1. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2013, ວັນທີ 24 ເມສາ 2014.

ຜູ້ອຳນວຍການໃຫຍ່ ໄດ້ລາຍງານຕໍ່ທີ່ປະຊຸມກ່ຽວກັບບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2013, ໄດ້ປະຊຸມເມື່ອວັນທີ 24 ເມສາ 2014 ໂດຍມີລາຍລະອຽດໃນເອກະສານຄັດຕິດ ເຊິ່ງໄດ້ຄັດຕິດພ້ອມກັບ ໜັງສືແຈ້ງເຊີນ ແລະ ສະພາບໍລິຫານ ໄດ້ຮັບຮອງຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວ, ເຫັນດີສະເໜີໃຫ້ກອງ ປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນດັ່ງກ່າວ.

ຫລັງຈາກ ຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 1 ແລ້ວ, ປະທານກອງປະຊຸມ ໄດ້ໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້, ແຕ່ບໍ່ມີຜູ້ຖື ຮຸ້ນທ່ານໃດມີຄຳຖາມ.

ຫລັງຈາກນັ້ນ ປະທານກອງປະຊຸມ ໄດ້ສະເໜີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບ ຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2013 ດັ່ງກ່າວ, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍ ຄະ ແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ຮັບຮອງເອົາບົດບັນທຶກກອງປະຊຸມ ສາມັນຜູ້ຖືຮຸ້ນປະຈຳປີ 2013, ວັນທີ 24 ເມສາ 2014, ດ້ວຍຄະແນນສຽງທັງໝົດຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

- **ເຫັນດີຈຳນວນ 1.102.208.701 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 2. ພິຈາລະນາ ແລະ ຮັບຮອງລາຍງານການເງິນ 6 ເດືອນຕົ້ນປີ 2014 ແລະ ການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2014.

ຜູ້ອຳນວຍການໃຫຍ່ໄດ້ລາຍງານຕໍ່ທີ່ປະຊຸມ: ອີງຕາມການມອບອຳນາດ ຈາກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2012 ຄັ້ງວັນທີ 22 ເມສາ 2013. ການເຄື່ອນໄຫວທຸລະກິດ ຂອງບໍລິສັດໃນ 6 ເດືອນຕົ້ນປີ 2014 ມີກຳໄລທັງໝົດປະມານ 326,698 ຕື້ກີບ, ຊຶ່ງຜູ້ກວດສອບພາຍນອກໄດ້ມີການທົບທວນແລ້ວ ແລະ ບໍລິສັດໄດ້ເປີດເຜີຍລາຍງານດັ່ງກ່າວໃນເວັບໄຊທ໌ ຂອງ ຕະຫລາດຫລັກຊັບລາວ ແລະ ເວັບໄຊທ໌ ຂອງ ບໍລິສັດ.

ບໍລິສັດໄດ້ຈ່າຍເງິນປັນຜົນ 6 ເດືອນຕົ້ນປີ 2014 ໃຫ້ຜູ້ຖືຮຸ້ນທີ່ມີລາຍຊື່ໃນປຶ້ມບັນຊີຜູ້ຖືຮຸ້ນ ທີ່ໄດ້ກຳນົດສິດຂອງຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ ໃນວັນທີ 29 ກັນຍາ 2014 ໃນອັດຕາ 182 ກີບຕໍ່ຮຸ້ນ, ລວມເງິນປັນຜົນທີ່ຈ່າຍທັງໝົດປະມານ 223,17 ຕື້ກີບ ແລະ ໄດ້ຈ່າຍເງິນປັນຜົນດັ່ງກ່າວໃຫ້ຜູ້ຖືຮຸ້ນ ໃນວັນທີ 10 ຕຸລາ 2014.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາຮັບຮອງເອົາບົດລາຍງານການເງິນ 6 ເດືອນຕົ້ນປີ 2014 ແລະການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2014.

ຫລັງຈາກຜູ້ອຳນວຍການໃຫຍ່ ໄດ້ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 2 ແລ້ວ, ປະທານກອງປະຊຸມ ໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນ ປະທານກອງປະຊຸມຈຶ່ງໄດ້ ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2014 ແລະຮັບຮອງເອົາລາຍງານການເງິນ 6 ເດືອນຕົ້ນປີ 2014, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະມີມະຕິ ເຫັນດີ ຮັບຮອງເອົາການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2014 ແລະລາຍງານການເງິນ 6 ເດືອນຕົ້ນປີ 2014 ດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.102.208.701 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 3. ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດ ຂອງ ບໍລິສັດ ປີ 2014 ລວມທັງລາຍງານການເງິນ ຂອງ ບໍລິສັດ ປີ 2014 ແລະ ແຜນການດຳເນີນທຸລະກິດ ຂອງ ບໍລິສັດປີ 2015.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ຜູ້ອຳນວຍການໃຫຍ່ ໄດ້ລາຍງານຕໍ່ທີ່ປະຊຸມກ່ຽວກັບການດຳເນີນທຸລະກິດ ໃນປີ 2014: ບໍລິສັດມີກຳໄລສຸດທິທັງໝົດປະມານ 907,68 ຕື້ກີບ; ຊຶ່ງໃນ 6 ເດືອນຕົ້ນປີ ບໍລິສັດໄດ້ຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນແລ້ວໃນວັນທີ 10 ຕຸລາ 2014. ບົດລາຍງານຜົນການດຳເນີນທຸລະກິດ ຂອງ ບໍລິສັດ ປີ 2014 ລວມທັງລາຍງານການເງິນຂອງບໍລິສັດປີ 2014 ເຊິ່ງຜູ້ກວດສອບບັນຊີພາຍນອກໄດ້ກວດສອບແລ້ວ, ຊຶ່ງໄດ້ຄັດຕິດພ້ອມກັບໜັງສືແຈ້ງເຊີນ.

ໃນປີ 2015, ບໍລິສັດມີແຜນຈະສືບຕໍ່ລົງທຶນໃນບັນດາເຂື່ອນໄຟຟ້າຕ່າງໆ ເຊັ່ນ:

ກ). ໂຄງການທີ່ລັດວິສາຫະກິດໄຟຟ້າລາວ (ຟຟລ) ລົງທຶນ.

ປະກອບມີ: ເຂື່ອນໄຟຟ້ານ້ຳສະນາ, ເຂື່ອນໄຟຟ້ານ້ຳຄານ 2, ເຂື່ອນໄຟຟ້ານ້ຳຄານ 3, ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່, ເຂື່ອນໄຟຟ້ານ້ຳງື່ມ 1 ພາກຂະຫຍາຍ 2 ໂຄງການ, ເຂື່ອນໄຟຟ້າເຊເສັດ 3, ເຂື່ອນໄຟຟ້ານ້ຳຈຽນ ລວມກຳລັງຕິດຕັ້ງທັງໝົດປະມານ 539 MW.

ຂ). ໂຄງການທີ່ລັດວິສາຫະກິດໄຟຟ້າລາວເຂົ້າຖືຮຸ້ນ

ປະກອບມີ: ເຂື່ອນໄຟຟ້ານ້ຳລອງ, ເຂື່ອນໄຟຟ້ານ້ຳງື່ມ 5, ເຂື່ອນໄຟຟ້ານ້ຳອູ 2, ເຂື່ອນໄຟຟ້ານ້ຳອູ 5, ເຂື່ອນໄຟຟ້ານ້ຳອູ 6, ລວມກຳລັງຕິດຕັ້ງທັງໝົດຕາມຊັດສ່ວນຖືຮຸ້ນ ປະມານ 100 MW.

ຄ). ໂຄງການທີ່ບໍລິສັດມີແຜນຈະລົງທຶນ ແລະເຂົ້າຮ່ວມທຶນ

ປະກອບມີ: ເຂື່ອນໄຟຟ້າເຊເສັດ 2 ພາກຂະຫຍາຍ, ເຂື່ອນໄຟຟ້າແຊລະບຳພາກຂະຫຍາຍ, ເຂື່ອນໄຟຟ້າຫ້ວຍລຳພັນຕອນລຸ່ມ, ເຂື່ອນໄຟຟ້ານ້ຳບີ 1, 2 ແລະ 3, ເຂື່ອນໄຟຟ້ານ້ຳກາລະບາຍ 1, 2 ແລະ 3, ເຂື່ອນໄຟຟ້ານ້ຳພູນ ລວມກຳລັງຕິດຕັ້ງທັງໝົດປະມານ 200,6 MW.

ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດ ຂອງ ບໍລິສັດ ປີ 2014 ລວມທັງລາຍງານການເງິນ ຂອງ ບໍລິສັດ ປີ 2014 ແລະ ແຜນການດຳເນີນທຸລະກິດ ຂອງ ບໍລິສັດປີ 2015.

ຫຼັງຈາກ ຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 3 ແລ້ວ, ປະທານກອງປະຊຸມ ໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້.

ຜູ້ຖືຮຸ້ນ ຊື່ ທ່ານ ສຸລະສິດ ມານາດີ ເປັນຜູ້ຖືຮຸ້ນມາປະຊຸມດ້ວຍຕົນເອງມີຄຳເຫັນແລະຄຳຖາມດັ່ງນີ້:

ຄຳເຫັນ ແລະຄຳຖາມ:

1) ເອກະສານຄັດຕິດ 3 ໃນໜັງສືແຈ້ງເຊີນຜູ້ຖືຮຸ້ນ ນັ້ນ ແມ່ນເອກະສານລາຍງານການເງິນ ທີ່ບໍ່ຄົບຊຸດ ບໍ່ມີຄຳອະທິບາຍລາຍລະອຽດ, ຄວນສິ່ງບົດລາຍງານການເງິນທີ່ຄົບຊຸດໃຫ້ຜູ້ຖືຮຸ້ນຊາບ ພ້ອມກັບໜັງສືຮຽນເຊີນປະຊຸມສາມັນຜູ້ຖືຮຸ້ນ. ໄດ້ສົ່ງ email ຫາ Investor Relation (IR) ຂອງສຳນັກງານໃຫຍ່ ເພື່ອສອບຖາມຂໍ້ມູນດັ່ງກ່າວກ່ອນປີໃໝ່ລາວ ແຕ່ຍັງບໍ່ທັນໄດ້ຄຳຕອບ, ສະເໜີຜູ້ບໍລິຫານຊີ້ນຳ IR ຂອງບໍລິສັດເອົາໃຈໃສ່ໃນການຕອບຄຳຖາມຂອງຜູ້ຖືຮຸ້ນດ້ວຍ.

2) ແຜນການຜະລິດ: ຜູ້ຖືຮຸ້ນສ່ວນຫລາຍຈະສົນໃຈລາຍຮັບ-ລາຍໄດ້ຂອງບໍລິສັດ, ແຜນການຜະລິດຄວນຈະມີແຜນລາຍຮັບເປັນເງິນກີບ ທຽບກັບປີຜ່ານມາ ພ້ອມທັງເຫດຜົນ ແລະແຜນຄາດຄະເນກຳໄລຕໍ່ຮຸ້ນ. ຜ່ານມາເຫັນແຕ່ແຜນຕົວເລກການຜະລິດເທົ່ານັ້ນ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

3) ເຂົ້າໃຈວ່າ ໃນປີນີ້ຈະມີເຂື່ອນໄຟຟ້ານ້ຳສະນາ, ເຂື່ອນໄຟຟ້ານ້ຳຄານ 2 ແລະ ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ ໂອນມາເປັນຊັບສິນ ຂອງ ບໍລິສັດ, ສັນຍາຊື້ຂາຍໄຟຟ້າ ລະຫວ່າງ ບໍລິສັດ ແລະ ລັດວິສາຫະກິດໄຟຟ້າລາວ ໄດ້ມີການປັບປຸງແລ້ວບໍ ແລະ ປັບແນວໃດ?.

4) ສັງເກດເຫັນວ່າ ຜ່ານມາບໍລິສັດໄດ້ຈ່າຍເງິນລ່ວງໜ້າໃຫ້ ກັບ ຟຟລ ໃນການຮັບໂອນເຂື່ອນໄຟຟ້ານ້ຳຄານສອງ ແລະ ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ ແລະ ເຂື່ອນໄຟຟ້າອື່ນໆອີກ. ໃນນາມເປັນຜູ້ຖືຮຸ້ນ ສະເໜີໃຫ້ບໍລິສັດ ເຮັດແຜນການໃຊ້ເງິນລົງທຶນ ໂດຍມີແຜນງົບປະມານຈະໃຊ້ເງິນເທົ່າໃດເປັນແຕ່ລະປີ ແລະ ແຜນການລົງທຶນ 5 ປີ ຈະໃຊ້ເງິນປະມານເທົ່າໃດ?.

ທ່ານ ປະທານກອງປະຊຸມ ຊີ້ນຳໃຫ້ ທ່ານ ຜູ້ອຳນວຍການໃຫຍ່ ເປັນຜູ້ໃຫ້ຄວາມກະຈ່າງແຈ້ງຕໍ່ຜູ້ຖືຮຸ້ນ, ມີລາຍລະອຽດດັ່ງນີ້:

ຄຳຕອບ:

1). ເອກະສານຄັດຕິດໜັງສືແຈ້ງເຊີນ ຖ້າຜູ້ຖືຮຸ້ນທ່ານໃດບໍ່ໄດ້ຮັບ ຈະຂໍກວດເບິ່ງຄືນ, ສຳລັບເລື່ອງທີ່ຜູ້ຖືຮຸ້ນໄດ້ສົ່ງ email ມາຖາມ IR ຂອງສຳນັກງານໃຫຍ່ແລ້ວ ຍັງບໍ່ທັນໄດ້ຮັບຄຳຕອບນັ້ນ, ໃນນາມຕາງໜ້າຂອງບໍລິສັດ ຕ້ອງຂໍໂທດຫລາຍ ຂໍກວດຄືນເບິ່ງກ່ອນ ອາດຈະຄ້າງຢູ່ໃນ email ຂອງພະນັກງານຄົນໃດໜຶ່ງ.

2). ແຜນລາຍຮັບເພີ່ມຂອງບໍລິສັດ ໃນປີ 2015 ທຽບໃສ່ປີ 2014, ມີແຜນຕົວເລກລາຍຮັບຈາກເຂື່ອນໄຟຟ້ານ້ຳສະນາ, ເງິນປັນຜົນຈາກເຂື່ອນໄຟຟ້ານ້ຳງື່ມ 5, ເຂື່ອນໄຟຟ້ານ້ຳຄານ 2 ແລະ ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່.

3). ສຳລັບເລື່ອງລາຄາໄຟຟ້າ ລະຫວ່າງ ຟຟລ ແລະ ບໍລິສັດ ກ່ຽວກັບບັນດາໂຄງການເຂື່ອນໄຟຟ້ານ້ຳສະນາ, ເຂື່ອນໄຟຟ້ານ້ຳຄານ2 ແລະ ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ ທີ່ໄດ້ກ່າວມາຂ້າງເທິງ, ຜ່ານມາໄດ້ມີການເຈ ລະຈາກັນ ຫຼາຍຄັ້ງແລ້ວ ເພື່ອໃຫ້ໄດ້ລາຄາທີ່ສົມເຫດສົມຜົນ ແລະ ເປັນທຳກັບຜູ້ຊື້ ແລະ ຜູ້ຂາຍແລະເໝາະສົມແກ່ການລົງທຶນ, ຊຶ່ງຄາດວ່າຈະສຳເລັດໃນກາງປີ 2015 ນີ້.

4). ຖ້າຜູ້ຖືຮຸ້ນທ່ານໃດມີຄວາມສົນໃຈ ເພີ່ມເຕີມສາມາດສອບຖາມ ຫຼື ສົ່ງ email ຫາ IR ຂອງສຳນັກງານໃຫຍ່ ຂອງ ບໍລິສັດໄດ້.

ຕໍ່ມາມີຜູ້ຖືຮຸ້ນອີກໜຶ່ງທ່ານ (ບໍ່ໄດ້ສະເໜີຊື່) ມີຄຳເຫັນ ແລະ ຄຳຖາມຄື:

ຄຳເຫັນ ແລະຄຳຖາມ:

1). ອີງຕາມໜັງສືຊວນຊື້ຂອງບໍລິສັດ ທີ່ໄດ້ລະບຸໄວ້ວ່າ ຈຸດປະສົງການດຳເນີນທຸລະກິດຂອງບໍລິສັດ ມີ 3 ປະເພດຄື: (1) ຜະລິດໄຟຟ້າເພື່ອຂາຍຍົກໃຫ້ແກ່ ລັດວິສາຫະກິດໄຟຟ້າລາວ ລວມທັງດຳເນີນການພັດທະນາລະບົບສາຍສົ່ງ ແລະ ສະຖານີໄຟຟ້າຫາກມີຄວາມຈຳເປັນ; (2) ລົງທຶນ ຫລືຮ່ວມທຶນໃນໂຄງການຜະລິດໄຟຟ້າອື່ນໆ; ແລະ (3) ໃຫ້ບໍລິການໃນການບໍລິຫານ ແລະ ບຳລຸງຮັກສາໂຄງການຜະລິດໄຟຟ້າອື່ນໆ. ສັງເກດເຫັນວ່າບໍລິສັດ ໄດ້ດຳເນີນທຸລະກິດຕາມຈຸດປະສົງທີ (1) ແລະ ຈຸດປະສົງທີ (2) ໂດຍມີຄວາມກ້າວໜ້າແລະເຕີບໃຫຍ່ຫລາຍສົມຄວນ ແລະ ແຕ່ວ່າຈຸດ ປະສົງທີ (3) ບໍລິສັດຍັງບໍ່ທັນມີແຜນລະອຽດເທື່ອ, ບໍລິສັດຄວນສົ່ງພະນັກງານໄປມີສ່ວນຮ່ວມໃນການເຮັດບໍລິຫານແລະບຳລຸງຮັກສາໂຄງການຜະລິດໄຟຟ້າທີ່ຕົນຖືຮຸ້ນ ແລະ ບໍລິສັດຄວນມີແຜນການດຳເນີນທຸລະກິດທັງ 3 ປະເພດໄປພ້ອມກັນ ແລະ ຄວນມີລາຍຮັບຈາກການດຳເນີນທຸລະກິດທັງ 3 ປະເພດ.

ປະທານກອງປະຊຸມ ໄດ້ຊີ້ນຳໃຫ້ ຜູ້ອຳນວຍການໃຫຍ່ ເປັນຜູ້ໃຫ້ຄວາມກະຈ່າງແຈ້ງຕໍ່ຜູ້ຖືຮຸ້ນ, ມີລາຍລະອຽດດັ່ງນີ້:

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ຄຳຕອບ:

1). ປະຈຸບັນແຫຼ່ງລາຍຮັບຂອງບໍລິສັດແມ່ນມີ 3 ລາຍຮັບຄື: ລາຍຮັບຈາກເຂື່ອນທີ່ບໍລິສັດຄຸ້ມຄອງ ແລະ ລາຍຮັບຈາກບັນດາເຂື່ອນທີ່ບໍລິສັດໄດ້ຖືຮຸ້ນ. ບັນດາໂຄງການທີ່ບໍລິສັດຖືຮຸ້ນນັ້ນ ບໍລິສັດບໍ່ສາມາດເຂົ້າໄປບໍລິຫານຈັດການໄດ້ໂດຍກົງ ແຕ່ວ່າບໍລິສັດໄດ້ສົ່ງບັນດາຜູ້ອຳນວຍການ ຈຳນວນໜຶ່ງໄປເປັນສະພາບໍລິຫານຢູ່ແຕ່ລະເຂື່ອນທີ່ບໍລິສັດເຂົ້າຖືຮຸ້ນ ເພື່ອມີສ່ວນຮ່ວມໃນການຕັດສິນບັນຫາຕ່າງໆ. ແລະ

2). ລາຍຮັບອັນທີ 3 ແມ່ນ ລາຍຮັບຈາກການບໍລິຫານ ແລະ ບຳລຸງຮັກສາໂຄງການເຂື່ອນໄຟຟ້າຂອງບໍລິສັດເອກະຊົນ ຊຶ່ງປັດຈຸບັນ ບໍລິສັດກໍໄດ້ປະຕິບັດຢູ່ເຂື່ອນໄຟຟ້າຕາດສະແລນ ແລະກຳລັງປະສານງານກັບບັນດາເຂື່ອນ ຜູ້ຜະລິດໄຟຟ້າເອກະລາດ (IPPs) ອື່ນໆ ເພື່ອຮັບໝ້າຄຸ້ມຄອງບຳລຸງຮັກສາ, ບໍລິສັດມີການລົງທຶນຈຳນວນໜຶ່ງເພື່ອສ້າງບຸກຄະລາກອນ ເພື່ອຮອງຮັບວຽກງານການບໍລິຫານຈັດການ ແລະ ບຳລຸງຮັກສາເຂື່ອນໄຟຟ້າ ແລະ ຈະຂະຫຍາຍວຽກງານນີ້ໃນອານາຄົດ. ແລະອີກລາຍຮັບໜຶ່ງແມ່ນ ລາຍຮັບຈາກມະນຸດກົບ ປັດຈຸບັນກໍ່ໄດ້ເຄື່ອນໄຫວຮັບບໍລິການໃນບັນດາເຂື່ອນ IPPs ຕ່າງໆ ແລະບໍລິສັດກໍໄດ້ລົງທຶນຈຳນວນໜຶ່ງເພື່ອພັດທະນາບຸກຄະລາກອນໜ່ວຍງານນີ້ໃຫ້ເປັນທີ່ຍອມຮັບຂອງສາກົນ ເພື່ອສ້າງລາຍຮັບໃຫ້ບໍລິສັດ.

ບໍ່ມີຜູ້ຖືຮຸ້ນທ່ານໃດ ມີຄຳຖາມອີກແລ້ວ, ທ່ານປະທານກອງປະຊຸມຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2014 ລວມທັງລາຍງານການເງິນຂອງບໍລິສັດ ປີ 2014 ແລະ ແຜນການດຳເນີນທຸລະກິດຂອງບໍລິສັດ ປີ 2015; ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະມີມະຕິ ເຫັນດີ ຮັບຮອງເອົາບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2014 ລວມທັງລາຍງານການເງິນຂອງບໍລິສັດ ປີ 2014 ແລະ ແຜນການດຳເນີນທຸລະກິດຂອງບໍລິສັດ ປີ 2015, ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.101.962.929 ສຽງ, ເທົ່າກັບ 99,977 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**
- **ບໍ່ເຫັນດີຈຳນວນ 252.022 ສຽງ, ເທົ່າກັບ 0,023 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 4. ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2014 (01/07/2014-31/12/2014).

ຜູ້ອຳນວຍການໃຫຍ່ໄດ້ລາຍງານຕໍ່ທີ່ປະຊຸມຄື: ອີງຕາມກົດລະບຽບຂອງບໍລິສັດ, ບໍລິສັດມີນະໂຍບາຍໃນການແບ່ງເງິນປັນຜົນໃນອັດຕາສ່ວນບໍ່ຫຼຸດຫ້າສິບ (50%) ສ່ວນຮ້ອຍຂອງກຳໄລສຸດທິ, ພາຍຫລັງຫັກສ້າງເປັນຄັງສຳຮອງຕາມລະບຽບການ ແລະ ຄັງສຳຮອງອື່ນໆ (ຖ້າມີ), ໃນແຕ່ລະປີ ຊຶ່ງການແບ່ງເງິນປັນຜົນຈະຂຶ້ນຢູ່ກັບສະພາບເສດຖະກິດ ແລະແຜນການລົງທຶນຕ່າງໆໃນອະນາຄົດ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ບໍລິສັດ ມີກຳໄລສຸດທິຈາກຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2014 ເປັນຈຳນວນເງິນທັງໝົດ 580,70 ຕື້ກີບ. ສະເໜີກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ 6 ເດືອນທ້າຍປີ 2014, ພາຍຫຼັງການຫັກເປັນຄັງສຳຮອງຕາມລະບຽບການ, ຄັງສຳຮອງເພື່ອການສ້ອມແປງເຂື່ອນ ແລະເພື່ອຂະຫຍາຍທຸລະກິດ ແລະ ຄັງສຳຮອງເພື່ອໃຫ້ບຳເນັດພະນັກງານ, ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ ໃນວັນທີ **27 ເມສາ 2015** ໃນອັດຕາ 268 ກີບຕໍ່ຮຸ້ນ, ລວມເປັນເງິນປັນຜົນຈ່າຍທັງໝົດ 328,63 ຕື້ກີບ ແລະກຳນົດຈ່າຍເງິນປັນຜົນໃນວັນທີ **5 ພຶດສະພາ 2015.**

ຫຼັງຈາກ ຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 4 ແລ້ວ, ປະທານກອງປະຊຸມ ໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມແຕ່ຢ່າງໃດ.

ຈາກນັ້ນ ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2014, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: **ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ອະນຸມັດການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2014 ດ້ວຍຄະແນນສຽງທັງໝົດ ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ, ດັ່ງນີ້:**

- **ເຫັນດີຈຳນວນ 1.102.214.951 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 5. ພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ປີ 2015.

ຜູ້ອຳນວຍການໃຫຍ່ໄດ້ລາຍງານຕໍ່ທີ່ປະຊຸມ: ໂດຍອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ມາດຕາ 154 ວ່າດ້ວຍສິດແລະໜ້າທີ່ ຂອງ ກອງປະຊຸມສາມັນຜູ້ຖືຮຸ້ນ ແລະ ອີງຕາມແຈ້ງການ ຂອງສຳນັກງານຄະນະກຳມະການຄຸ້ມຄອງຫລັກຊັບ ແລະ ຕະຫລາດຫລັກຊັບ ສະບັບເລກທີ 1514/ສຄລຕ, ລົງວັນທີ 27/12/2013 ວ່າດ້ວຍການແຈ້ງລາຍຊື່ບໍລິສັດກວດສອບບັນຊີທີ່ຖືກຮັບຮອງ ໂດຍສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ບໍລິສັດ ສະເໜີໃຫ້ແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ຄື : ບໍລິສັດ ພຣາຍອໍເຕີເຮົ້າກຸບເປີ ລາວຈຳກັດ (Price Waterhouse Coopers (Lao) Co., Ltd.) ເປັນຜູ້ກວດສອບບັນຊີພາຍນອກ ຂອງ ບໍລິສັດ ສຳລັບປີ 2015 ໂດຍມີຄ່າຈ້າງເປັນເງິນຈຳນວນ **94.500** ໂດລາສະຫະລັດ. ທັ້ງນີ້ກໍເພາະວ່າ ບໍລິສັດ ພຣາຍອໍເຕີເຮົ້າກຸບເປີ ລາວຈຳກັດ (PWC) ມີຜົນງານການກວດສອບບັນຊີໃຫ້ ຜ-ຟຟລ ເປັນຕົ້ນການປະຕິບັດວຽກງານ ແລະ ການປະສານງານແມ່ນຢູ່ໃນລະດັບດີ, ຜູ້ກວດສອບບັນຊີ ແລະ ທີມງານມີຄວາມເຂົ້າໃຈແຈ້ງໃນໜ້າທີ່ ໃນຖານະທີ່ເປັນຜູ້ກວດສອບບັນຊີອິດສະຫຼະມີຄວາມລະອຽດຮອບຄອບໃນການທົບທວນ ແລະ ການກວດສອບບັນຊີ ຂອງ ບໍລິສັດ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດ ແລະ ຄົບຖ້ວນແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງ ຂອງ ຜູ້ກວດສອບບັນຊີພາຍນອກດັ່ງກ່າວ.

ຫລັງຈາກຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 5 ແລ້ວ, ປະທານກອງປະຊຸມໄດ້ ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມສາມາດຖາມໄດ້.

ມີຜູ້ຖືຮຸ້ນຊື່ ທ່ານ ສຸລະສິດ ມານາດີ ເປັນຜູ້ຖືຮຸ້ນມາປະຊຸມດ້ວຍຕົນເອງ ມີຄຳເຫັນ ແລະ ຄຳຖາມ ດັ່ງ ລຸ່ມນີ້:

ຄຳຖາມ:

1). ເປັນຫຍັງຄ່າຈ້າງຜູ້ກວດສອບບັນຊີພາຍນອກເພື່ອກວດສອບບັນຊີຂອງບໍລິສັດ ປີ 2015 ຈຶ່ງແພງ ກວ່າຄ່າຈ້າງປີຜ່ານມາ, ເມື່ອທຽບກັບບໍລິສັດອື່ນໆ ເຫັນວ່າຄ່າຈ້າງດັ່ງກ່າວນັ້ນລົ້ນກັນຫລາຍສົມຄວນ.

ປະທານກອງປະຊຸມ ໄດ້ຊີ້ນຳໃຫ້ ຜູ້ອຳນວຍການໃຫຍ່ ເປັນຜູ້ໃຫ້ຄວາມກະຈ່າງແຈ້ງຕໍ່ຜູ້ຖືຮຸ້ນ, ຊຶ່ງມີ ລາຍລະອຽດດັ່ງນີ້:

ຄຳຕອບ:

(1). ຄ່າຈ້າງຜູ້ກວດສອບບັນຊີພາຍນອກປີ 2015 ເມື່ອທຽບໃສ່ຄ່າຈ້າງຜູ້ກວດສອບພາຍນອກປີຜ່ານ ມາເຫັນວ່າມີຄວາມແຕກຕ່າງກັນຫລາຍ ເນື່ອງຈາກວ່າ ໃນປີ 2015 ມີວຽກຕ້ອງກວດສອບເພີ່ມຈາກປີຜ່ານມາອີກ ສອງ ໄຕມາດ ຄື : ໄຕມາດສອງ ແລະ ໄຕມາດສີ່ (ອີງຕາມລະບຽບ ຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫລັກຊັບ) ພ້ອມກັນນີ້ ໃນປີ 2015 ບໍລິສັດຈະໄດ້ຮັບໂອນ 2 ເຂື່ອນຈາກ ລັດວິສາຫະກິດໄຟຟ້າລາວ.

(2). ຄວາມແຕກຕ່າງລະຫວ່າງການກວດສອບບັນຊີຢູ່ບໍລິສັດ ແລະ ການກວດສອບບັນຊີຢູ່ເຂື່ອນໄຟ ຟ້ານ້ຳງື່ມສອງຄື: ເຂື່ອນໄຟຟ້ານ້ຳງື່ມສອງມີເຂື່ອນດຽວ ໃນການກວດສອບບັນຊີ, ສ່ວນການກວດສອບບັນຊີຢູ່ບໍລິສັດປີ 2015 ແມ່ນມີ 8 ເຂື່ອນໄຟຟ້າທີ່ຕົນຄຸ້ມຄອງ ແລະ 5 ເຂື່ອນໄຟຟ້າທີ່ບໍລິສັດໄດ້ເຂົ້າຖືຮຸ້ນ.

ເວລາຕໍ່ມາບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມອີກແລ້ວ, ຈາກນັ້ນປະທານກອງປະຊຸມຈຶ່ງໄດ້ ສະເໜີໃຫ້ກອງ ປະຊຸມພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບ ບັນຊີພາຍນອກ ປີ 2015, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະມີມະຕິເຫັນດີ ອະນຸມັດການແຕ່ງຕັ້ງຜູ້ກວດສອບ ບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ປີ 2015, ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ, ໂດຍມີຄະ ແນນສຽງດັ່ງນີ້:

- **ເຫັນດີຈຳນວນ 1.101.974.128 ສຽງ, ເທົ່າກັບ 99,976 ສ່ວນຮ້ອຍ ຂອງຈຳນວນສຽງ ທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**
- **ບໍ່ເຫັນດີຈຳນວນ 268.323 ສຽງ, ເທົ່າກັບ 0,024 ສ່ວນຮ້ອຍ ຂອງຈຳນວນສຽງທັງ ໝົດທີ່ເຂົ້າຮ່ວມກອງປະຊຸມ.**

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ວາລະທີ 6. ພິຈາລະນາ ແລະ ອະນຸມັດການເພີ່ມຕົວຄູນດັດສະນີເງິນເດືອນພື້ນຖານ ຂອງ ພະນັກງານບໍລິສັດ ໃນ ສົກປີງົບປະມານ 2015.

ຜູ້ອຳນວຍການໃຫຍ່ໄດ້ລາຍງານຕໍ່ທີ່ປະຊຸມຄື: ອີງໃສ່ສະພາບເສດຖະກິດອັດຕາເງິນເຟີ້ ແລະ ການ ເຕີບໃຫ່ຍຂະຫຍາຍຕົວ ຂອງ ບໍລິສັດ ແລະ ອີງໃສ່ຜົນການດຳເນີນທຸລະກິດຂອງບໍລິສັດ ໃນປີຜ່ານມາເຫັນວ່າປະສົບ ຜົນສຳເລັດ ໃນລະດັບດີສົມຄວນ; ດັ່ງນັ້ນ, ເພື່ອເປັນການຊຸກຍູ້ຄວາມຫ້າວຫັນ ຂອງ ພະນັກງານຂອງບໍລິສັດທຸກລະດັບ ໃຫ້ປະຕິບັດວຽກງານດ້ວຍຄວາມຮັບຜິດຊອບສູງ, ມີສ່ວນຮ່ວມໃນການພັດທະນາ ແລະ ການດຳເນີນທຸລະກິດຂອງ ບໍລິສັດດ້ວຍຄວາມພາກພູມໃຈ ແລະມີຄວາມຮູ້ສຶກເປັນເຈົ້າຂອງບໍລິສັດຮ່ວມກັນ. ສະເໜີກອງປະຊຸມພິຈາລະນາເພີ້ມ ຕົວຄູນດັດສະນີເງິນເດືອນພື້ນຖານຂອງພະນັກງານຂຶ້ນຕື່ມແປດ (8%) ສ່ວນຮ້ອຍ ໃນສົກງົບປະມານປີ 2015.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ຮັບຮອງ ເອົາການເພີ່ມຕົວຄູນດັດສະນີເງິນເດືອນພື້ນຖານຂອງພະນັກງານບໍລິສັດ ໃນສົກງົບປະມານ 2015 ຕາມການສະເໜີທຸກ ປະການ.

ຫລັງຈາກຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 6 ແລ້ວ, ປະທານກອງປະຊຸມໄດ້ ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມສາມາດຖາມໄດ້.

ມີຜູ້ຖືຮຸ້ນຊື່ ທ່ານ ສຸລະສິດ ມານາດີ ເປັນຜູ້ຖືຮຸ້ນມາປະຊຸມດ້ວຍຕົນເອງ ມີຄຳເຫັນ ແລະ ຄຳຖາມດັ່ງ ນີ້:

ຄຳຖາມ:

(1) ໃນປີຜ່ານມາຕົວຄູນດັດສະນີເງິນເດືອນຂອງພະນັກງານສະເໜີເພີ່ມ 6 ສ່ວນຮ້ອຍ ແຕ່ເປັນ ຫຍັງໃນສົກງົບປະມານປີ 2015 ຈຶ່ງສະເໜີເພີ່ມຕົວຄູນດັດສະນີເງິນເດືອນຂອງພະນັກງານ 8 ສ່ວນຮ້ອຍ?.

ມີຜູ້ຖືຮຸ້ນໜຶ່ງທ່ານ (ບໍ່ໄດ້ສະເໜີຊື່) ມີຄຳເຫັນ ແລະຄຳຖາມ:

ຄຳຖາມ:

(2) ເຫັນວ່າອັດຕາເງິນເຟີ້ສູງສົມຄວນ ເປັນຫຍັງການຂຶ້ນເງິນເດືອນພື້ນຖານໃຫ້ພະນັກງານບໍລິ ສັດສົກງົບປະມານປີ 2015 ຈຶ່ງມີພຽງແຕ່ (8%) ສ່ວນຮ້ອຍເທົ່ານັ້ນ, ຄວນຈະຂຶ້ນໃຫ້ເຂົາເຈົ້າຫລາຍກວ່ານີ້?.

ປະທານກອງປະຊຸມ ໄດ້ຊີ້ນຳໃຫ້ ຜູ້ອຳນວຍການໃຫຍ່ ເປັນຜູ້ໃຫ້ຄວາມກະຈ່າງແຈ້ງຕໍ່ຜູ້ຖືຮຸ້ນ, ມີ ລາຍລະອຽດດັ່ງນີ້:

ຄຳຕອບ:

1). ເຫດຜົນທີ່ໄດ້ເພີ່ມຕົວຄູນດັດສະນີເງິນເດືອນຂອງພະນັກງານຂຶ້ນຕື່ມ 8 ສ່ວນຮ້ອຍ, ມີຫລາຍ ເຫດຜົນສົມຄວນຄື:

- ອັດຕາເງິນເຟີ້ ປີຜ່ານມາປະມານ 5,16 ສ່ວນຮ້ອຍ;
- ຄ່າຄອງຊີບດ້ານອາຫານເພີ່ມຂຶ້ນ ປະມານ 3,35 ສ່ວນຮ້ອຍ;
- ລາຄາເຄື່ອງອຸປະໂພກມີການເໜັ້ງຂຶ້ນປະມານ 1,81 ສ່ວນຮ້ອຍ.
- ເງິນເດືອນຂັ້ນຕ່ຳທີ່ລັດຖະບານປະກາດໃຊ້ໃນວັນທີ 1/04/2015 ແມ່ນເພີ່ມຈາກ 600.000 ກີບ ເປັນ 900.000 ກີບ.
- ການຂະຫຍາຍຕົວຂອງທຸລະກິດບໍລິສັດ ຊຶ່ງເມື່ອກ່ອນມີກຳລັງຕິດຕັ້ງ 881 ເມກາວັດ ແລະໃນ ອະນາຄົດອັນໃກ້ນີ້ ບໍລິສັດມີແຜນຈະຂະຫຍາຍກຳລັງຕິດຕັ້ງໃຫ້ໄດ້ປະມານ 1,000 ເມກາວັດ,

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ຊຶ່ງຈະເຮັດໃຫ້ລາຍຮັບຂອງບໍລິສັດເພີ່ມຂຶ້ນ ແຕ່ພ້ອມດຽວກັນນັ້ນຈຳນວນພະນັກງານ ຂອງ ບໍລິສັດຍັງຈະຮັກສາໄວ້ຈຳນວນເທົ່າເດີມ.

- ອີງການ ອປສ ໄດ້ຫັກເງິນສົມຂອງພະນັກງານເພີ່ມຂຶ້ນອີກ 1 ສ່ວນຮ້ອຍ.
- ເພື່ອເປັນການສ້າງແຮງຈູງໃຈໃຫ້ພະນັກງານ ຜູ່ທີ່ມີຄວາມສາມາດດ້ານວິຊາການ ແລະມີຄວາມສາມາດດ້ານວຽກງານອື່ນໆນັ້ນ ໃຫ້ຢູ່ຄູ່ກັບບໍລິສັດຂອງພວກເຮົາ, ເນື່ອງຈາກປັດຈຸບັນໄດ້ມີຫລາຍບໍລິສັດທີ່ມີການແຂ່ງຂັນຍາດເອົາພະນັກງານທີ່ເກັ່ງໄປຢູ່ໃນບໍລິສັດຕ່າງໆ. ພ້ອມດຽວກັນນັ້ນ ເງິນເດືອນສະເລ່ຍທີ່ເພີ່ມຂຶ້ນນີ້ ປະມານ 164.481 ກີບ ເທົ່ານັ້ນ.

2). ການພິຈາລະນາເພີ່ມດັດສະນີເງິນເດືອນພື້ນຖານຂອງພະນັກງານບໍລິສັດ ໃນສົກງົບປະມານ ປີ 2015, ສະພາບໍລິຫານຂອງບໍລິສັດ ໄດ້ພິຈາລະນາໂດຍໄດ້ຄຳນຶງເຖິງຫລາຍດ້ານຄື: ມີການສົມທຽບໃສ່ເງິນເດືອນຂອງ ບໍລິສັດ ຫຼື ວິສາຫະກິດອ້ອມຂ້າງຂອງຕົນ, ເພື່ອບໍ່ໃຫ້ເງິນເດືອນຫຼຸດລົ່ນກັນຫຼາຍເກີນໄປ. ການເພີ່ມເງິນເດືອນນອກຈາກຈະເປັນການກະຕຸກຊຸກຍູ້ພະນັກງານ ບໍລິສັດຍັງໄດ້ລະດົມຄວາມຄິດ ແລະແນວຄິດຂອງພະນັກງານ ໃຫ້ມີຄວາມເຂົ້າໃຈແນວທາງຂອງບໍລິສັດ, ມີຄວາມຮັບຜິດຊອບ ແລະມີຈັນຍາບັນກັບສັງຄົມໃນປັດຈຸບັນ.

ເວລາຕໍ່ມາ ເນື່ອງຈາກບໍ່ມີຜູ່ຖືຮຸ້ນທ່ານໃດ ມີຄຳຖາມອີກແລ້ວ, ປະທານກອງປະຊຸມໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດການເພີ່ມຕົວຄູນດັດສະນີເງິນເດືອນພື້ນຖານ ຂອງພະນັກງານບໍລິສັດຂຶ້ນຕື່ມອີກ 8 ສ່ວນຮ້ອຍໃນສົກງົບປະມານ 2015, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະມີມະຕິ ເຫັນດີ ອະນຸມັດການເພີ່ມຕົວຄູນດັດສະນີເງິນເດືອນພື້ນຖານ ຂອງ ພະນັກງານບໍລິສັດຂຶ້ນຕື່ມອີກ 8 ສ່ວນຮ້ອຍໃນສົກງົບປະມານ 2015, ດ້ວຍຄະແນນຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.101.767.142 ສຽງ, ເທົ່າກັບ 99,957 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**
- **ບໍ່ເຫັນດີຈຳນວນ 475.309 ສຽງ, ເທົ່າກັບ 0,043 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 7. ພິຈາລະນາ ແລະ ອະນຸມັດມູນຄ່າການຮັບໂອນຊັບສິນໂຄງການເຂື່ອນໄຟຟ້ານ້ຳຄານ 2 ແລະ ເຂື່ອນໄຟຟ້າຫວ້ຍລຳພັນໃຫຍ່ ຈາກລັດວິສາຫະກິດໄຟຟ້າລາວ.

ຜູ່ອຳນວຍການໃຫຍ່ໄດ້ລາຍງານຕໍ່ທີ່ປະຊຸມຄື: ເນື່ອງຈາກວ່າ 2 ໂຄງການເຂື່ອນໄຟຟ້າດັ່ງກ່າວ ສະພາແຫ່ງຊາດເຫັນດີໃຫ້ ລັດວິສາຫະກິດໄຟຟ້າລາວ (ຟຟລ) ໂອນຊັບສິນ 2 ໂຄງການເຂື່ອນໄຟຟ້າໃຫ້ກັບບໍລິສັດ, ຕາມມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 051/ຄປຈ, ລົງວັນທີ 13 ມີຖຸນາ 2012. ດັ່ງນັ້ນ, ເພື່ອເຮັດໃຫ້ການດຳເນີນທຸລະກິດ ຂອງ ບໍລິສັດ ບັນລຸເປົ້າໝາຍທີ່ວາງໄວ້ ແລະ ເພື່ອຂະຫຍາຍການລົງທຶນ ແລະ ການດຳເນີນທຸລະກິດຂອງບໍລິສັດ ແນໃສ່ສ້າງຄວາມຮັ່ງມີ ໃຫ້ແກ່ຜູ່ຖືຮຸ້ນຢ່າງຕໍ່ເນື່ອງແລະນັບມື້ນັບເພີ່ມຂຶ້ນ. ບໍລິສັດ ສະເໜີກອງປະຊຸມພິຈາລະນາມູນຄ່າການຮັບໂອນຊັບສິນ 2 ໂຄງການເຂື່ອນໄຟຟ້າດັ່ງກ່າວ, ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

1) ໂຄງການເຂື່ອນໄຟຟ້ານ້ຳຄານ 2, ກຳລັງຕິດຕັ້ງ 130 ເມກາວັດ, ມູນຄ່າປະມານ 336,16 ລ້ານໂດລາສະຫະລັດ;

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

2) ໂຄງການເຂື່ອນໄຟຟ້າຫວ້ຍລໍາພັນໃຫຍ່, ກໍາລັງຕິດຕັ້ງ 88 ເມກາວັດ, ມູນຄ່າປະມານ 226,73 ລ້ານໂດລາ ສະຫະລັດ.

ເຖິງຢ່າງໃດກໍດີ, ການໂອນຊັບສິນ 2 ໂຄງການດັ່ງກ່າວ ໂດຍ ຟຟລ ແລະ ການຮັບໂອນຊັບສິນໂຄງການໂດຍ ບໍລິສັດ ຈະເກີດຂຶ້ນກໍ່ຕໍ່ເມື່ອຄູ່ສັນຍາໄດ້ປະຕິບັດຕາມເງື່ອນໄຂພາຍໃຕ້ບົດບັນທຶກຄວາມເຂົ້າໃຈ ເຊິ່ງທັງສອງຝ່າຍໄດ້ ສ້າງຂຶ້ນໃຫ້ສໍາເລັດຄົບຖ້ວນ, ໂດຍມີເງື່ອນໄຂທີ່ສໍາຄັນ ໃນບົດບັນທຶກຄວາມເຂົ້າໃຈຂອງໂຄງການດັ່ງກ່າວດັ່ງນີ້:

(1) ຄູ່ສັນຍາແຕ່ລະຝ່າຍຕ້ອງໄດ້ຮັບການອະນຸມັດ ທີ່ຈໍາເປັນທັງໝົດຈາກສະພາບໍລິຫານ ເພື່ອໃຫ້ສາມາດໂອນ ຫຼື ຮັບໂອນຊັບສິນທີ່ຈະໂອນຕາມຂໍ້ກໍານົດ ຂອງ ບົດບັນທຶກຄວາມເຂົ້າໃຈ ແລະ ສັນຍາໂອນຊັບສິນໂຄງການ;

(2) ຄູ່ສັນຍາແຕ່ລະຝ່າຍໄດ້ຮັບຄວາມຍິນຍອມ ຫຼື ການອະນຸມັດທີ່ຈໍາເປັນທັງໝົດຈາກໜ່ວຍງານລັດ ເພື່ອໃຫ້ ສາມາດໂອນ ຫຼື ຮັບໂອນຊັບສິນທີ່ຈະໂອນຕາມຂໍ້ກໍານົດຂອງບົດບັນທຶກຄວາມເຂົ້າໃຈ ແລະ ສັນຍາໂອນຊັບ ສິນໂຄງການ;

(3) ຟຟລ ໄດ້ຮັບຄວາມຍິນຍອມ ຫຼື ການອະນຸມັດທີ່ຈໍາເປັນທັງໝົດຈາກບັນດາບຸກຄົນອື່ນທີ່ກ່ຽວຂ້ອງ, ເຈົ້າໜີ້ (ຖ້າມີ) ເພື່ອໃຫ້ສາມາດໂອນຊັບສິນທີ່ຈະໂອນຕາມຂໍ້ກໍານົດ ຂອງ ບົດບັນທຶກຄວາມເຂົ້າໃຈ ແລະ ສັນຍາໂອນ ຊັບສິນໂຄງການ; ແລະ

(4) ບໍລິສັດ ໄດ້ຮັບຄວາມເຫັນດີຈາກກອງປະຊຸມຜູ້ຖືຮຸ້ນຕາມທີ່ຈໍາເປັນເພື່ອໃຫ້ສາມາດຮັບໂອນຊັບສິນທີ່ຈະໂອນ ຕາມຂໍ້ກໍານົດ ຂອງ ບົດບັນທຶກຄວາມເຂົ້າໃຈ ແລະ ສັນຍາໂອນຊັບສິນໂຄງການ.

ແລະສະເໜີກອງປະຊຸມຜູ້ຖືຮຸ້ນມອບອໍານາດໃຫ້ຜູ້ອໍານວຍການໃຫຍ່ຂອງບໍລິສັດ ແລະ/ຫຼື ບຸກຄົນທີ່ໄດ້ ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອໍານາດໃນການຕິດຕໍ່, ເຈລະຈາ, ກໍານົດເງື່ອນໄຂ, ມູນຄ່າການໂອນ ແລະ ລາຍລະອຽດທີ່ກ່ຽວຂ້ອງ, ດັດແກ້, ເພີ້ມເຕີມ, ຕີກລົງ, ລົງນາມ, ສົ່ງມອບເອກະສານ ແລະ/ຫຼື ສັນຍາຕ່າງໆ ທີ່ກ່ຽວ ຂ້ອງກັບການຮັບໂອນຊັບສິນດັ່ງກ່າວຂ້າງເທິງນີ້ກັບ ຟຟລ ແລະ/ຫຼື ບຸກຄົນທີ່ກ່ຽວຂ້ອງກັບການຮັບໂອນຊັບສິນດັ່ງກ່າວ, ຊຶ່ງລວມເຖິງແຕ່ບໍ່ຈໍາກັດພຽງ ສັນຍາໂອນຊັບສິນໂຄງການ ລວມເຖິງແຕ່ບໍ່ຈໍາກັດ ພຽງການເປີດເຜີຍຂໍ້ມູນໃດໜຶ່ງທີ່ ກ່ຽວຂ້ອງ, ການຕິດຕໍ່, ການໃຫ້ຂໍ້ຄວາມ, ຂໍ້ມູນແກ່ໜ່ວຍງານລັດ ແລະ/ຫຼື ອົງການລັດຕ່າງໆທີ່ກ່ຽວຂ້ອງ ສໍານັກງານ ຄະນະກໍາມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວ ຕະຫຼອດການກະກຽມ, ດັດແກ້, ເພີ້ມເຕີມ ແລະ/ຫຼື ປ່ຽນແປງຂໍ້ມູນທີ່ກ່ຽວຂ້ອງທີ່ຈະຕ້ອງເປີດເຜີຍ ລວມເຖິງການດໍາເນີນການໃດໜຶ່ງທີ່ຈໍາເປັນ ແລະ ກ່ຽວເນື່ອງກັບການ ດໍາເນີນການດັ່ງກ່າວໄດ້ທຸກຢ່າງຈົນສໍາເລັດ, ລວມທັງໃຫ້ມີອໍານາດໃນການແຕ່ງຕັ້ງ ແລະ/ຫຼື ຖອດຖອນຜູ້ຮັບມອບ ອໍານາດຕໍ່ໃນການດໍາເນີນການໃດໜຶ່ງດັ່ງກ່າວຂ້າງເທິງນີ້ທຸກປະການ.

ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາອະນຸມັດ ການໂອນຊັບສິນໂຄງການດັ່ງກ່າວຂ້າງເທິງ ຈາກ ຟຟລ ແລະ ການມອບອໍານາດດັ່ງກ່າວຂ້າງເທິງທຸກປະການ.

ຫຼັງຈາກ ຜູ້ອໍານວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 7 ແລ້ວ, ປະທານກອງປະຊຸມໄດ້ເປີດ ໂອກາດ ເຊີນຜູ້ຖືຮຸ້ນປະກອບຄໍາຄິດຄໍາເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄໍາຖາມ ສາມາດຖາມໄດ້.

ມີຜູ້ຖືຮຸ້ນຊື່ ທ່ານ ສຸລະສິດ ມາມາດີ ເປັນຜູ້ຖືຮຸ້ນມາປະຊຸມດ້ວຍຕົນເອງ ມີຄໍາເຫັນ ແລະຄໍາຖາມດັ່ງນີ້:

ຄໍາຖາມ:

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ์: www.edlgen.com.la

1). ລາຍລະອຽດຂອງໜີ້ສິນທັງສອງໂຄງການດັ່ງກ່າວ ທີ່ບໍລິສັດຈະຮັບໂອນຈາກ ລັດວິສາຫະກິດໄຟຟ້າລາວນັ້ນມີປະມານເທົ່າໃດ ແລະ ສາມາດເປີດເຜີຍໄດ້ບໍ? ຫລື ເປັນຊັດສ່ວນປະມານຈັກສ່ວນຮ້ອຍ.

2). ລາຍຮັບຂອງທັງສອງໂຄງການດັ່ງກ່າວຂ້າງເທິງນັ້ນ ຈະໂອນມາເປັນຂອງບໍລິສັດເດືອນໃດ? ເນື່ອງຈາກວ່າຈະຜົນຕໍ່ກຳໄລຕໍ່ຮຸ້ນ.

ປະທານກອງປະຊຸມ ໄດ້ຊີ້ນຳໃຫ້ ຜູ່ອຳນວຍການໃຫຍ່ ເປັນຜູ່ໃຫ້ຄວາມກະຈ່າງແຈ້ງຕໍ່ຜູ່ຖືຮຸ້ນ, ມີລາຍລະອຽດດັ່ງນີ້:

ຄຳຕອບ:

1). ການຮັບໂອນທັງສອງໂຄງການນັ້ນ, ບໍລິສັດຕ້ອງໄດ້ຈ່າຍເປັນເງິນສົດຈຳນວນໜຶ່ງ ແລະ ຕ້ອງໄດ້ໃຊ້ໜີ້ຕົ້ນທຶນດອກເບ້ຍ ຕາມສັນຍາເງິນກູ້ຂອງແຕ່ລະໂຄງການ.

2). ລາຍຮັບຂອງທັງສອງໂຄງການນັ້ນ ຄາດວ່າຈະໂອນເປັນຂອງບໍລິສັດໃນມື້ເລີ່ມຊື້-ຂາຍໄຟຟ້າຢ່າງເປັນທາງການ, ປະມານທ້າຍປີ 2015.

ເວລາຕໍ່ມາ ເນື່ອງຈາກບໍ່ມີຜູ່ຖືຮຸ້ນທ່ານໃດ ມີຄຳຖາມອີກແລ້ວ, ປະທານກອງປະຊຸມໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດມູນຄ່າການຮັບໂອນຊັບສິນໂຄງການເຂື່ອນໄຟຟ້ານ້ຳຄານ 2 ແລະ ເຂື່ອນໄຟຟ້າຫວ້ຍລຳພັນໃຫຍ່ ຈາກລັດວິສາຫະກິດໄຟຟ້າລາວ. ວາລະນີ້ ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍສຽງຢ່າງໜ້ອຍສອງສ່ວນສາມ (2/3) ຂອງຜູ່ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ມີຮຸ້ນລວມກັນຢ່າງໜ້ອຍແປດສິບສ່ວນຮ້ອຍ (80%) ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.

ມະຕິ: **ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ອະນຸມັດມູນຄ່າການຮັບໂອນຊັບສິນໂຄງການເຂື່ອນໄຟຟ້ານ້ຳຄານ 2 ແລະ ເຂື່ອນໄຟຟ້າຫວ້ຍລຳພັນໃຫຍ່ ຈາກລັດວິສາຫະກິດໄຟຟ້າລາວ, ລວມທັງການມອບອຳນາດໃຫ້ຜູ່ອຳນວຍການໃຫຍ່ ທີ່ສະເໜີມາຂ້າງເທິງທຸກປະການ, ດ້ວຍຄະແນນຫຼາຍກວ່າສອງສ່ວນສາມ (2/3) ແລະ ຖືຮຸ້ນລວມກັນຫຼາຍກວ່າແປດສິບສ່ວນຮ້ອຍ (80%) ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ, ໂດຍມີຄະແນນສຽງດັ່ງນີ້:**

(ກ) ຈຳນວນຄົນ (ສຽງ) ຂອງຜູ່ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ:

1. ເຫັນດີ 659 ຄົນ (ສຽງ), ເທົ່າກັບ 98,51 ສ່ວນຮ້ອຍ ທຽບໃສ່ຈຳນວນຜູ່ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.
2. ບໍ່ເຫັນດີ 10 ຄົນ (ສຽງ), ເທົ່າກັບ 1,49 ສ່ວນຮ້ອຍ ທຽບໃສ່ຈຳນວນຜູ່ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ

(ຂ) ຈຳນວນຮຸ້ນ (ສຽງ) ຂອງຜູ່ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ :

1. ເຫັນດີ 1.102.235.751 ຮຸ້ນ (ສຽງ), ເທົ່າກັບ 89,89 ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

2. ບໍ່ເຫັນດີ 6.700 ຮຸ້ນ (ສຽງ), ເທົ່າກັບ 0,001 ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວ ທັງໝົດຂອງບໍລິສັດ.

ວາລະທີ 8. ພິຈາລະນາ ແລະ ຮັບຮອງການດັດແກ້ເນື້ອໃນກົດລະບຽບ ຂອງ ບໍລິສັດ

ຜູ້ອຳນວຍການໃຫຍ່ໄດ້ລາຍງານຕໍ່ທີ່ປະຊຸມຄື: ເພື່ອເຮັດໃຫ້ການປະຕິບັດວຽກງານ ຂອງ ບໍລິສັດ ຖືກຕ້ອງຕາມກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ສະບັບເລກທີ 046/ສພຊ, ລົງວັນທີ 26 ທັນວາ 2013. ສະເໜີກອງປະຊຸມພິຈາລະນາການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ, ໂດຍເພີ່ມມາດຕາ ທີ 13, ຊຶ່ງມີເນື້ອໃນດັ່ງນີ້:

ມາດຕາ 13 (ໃໝ່) ມະຕິ ແລະ ບົດບັນທຶກກອງປະຊຸມ ຂອງ ສະພາບໍລິຫານ

ມະຕິກອງປະຊຸມສະພາບໍລິຫານ ຈະມີຄຸນຄ່າໃຊ້ໄດ້ກໍຕໍ່ເມື່ອ ໄດ້ຮັບຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງ ຜູ້ອຳນວຍການທີ່ເຂົ້າຮ່ວມປະຊຸມ. ຜູ້ອຳນວຍການຜູ້ໜຶ່ງມີໜຶ່ງຄະແນນສຽງ.

ໃນຖານະເປັນຜູ້ອຳນວຍການ, ປະທານກອງປະຊຸມສະພາບໍລິຫານໃຫ້ລົງຄະແນນສຽງຄືກັນກັບຜູ້ອຳນວຍການຄົນອື່ນ. ຖ້າຜົນຂອງການລົງຄະແນນສຽງດັ່ງກ່າວນັ້ນມີຄະແນນສຽງເທົ່າກັນ ໃຫ້ປະທານລົງຄະແນນສຽງອີກຄັ້ງໜຶ່ງເພື່ອຕັດສິນ.

ໃນກໍລະນີການແກ້ໄຂວຽກງານອັນຮີບດ່ວນ ຊຶ່ງບໍລິສັດບໍ່ສາມາດເປີດກອງປະຊຸມສາມັນ ຫຼື ວິສາມັນ ແມ່ນໃຫ້ປະຕິບັດການລົງມະຕິກອງປະຊຸມສະພາບໍລິຫານດ້ວຍຮູບແບບການສື່ສານໃດໜຶ່ງ ເພື່ອເຮັດມະຕິວຽນເຊັນກໍ່ໄດ້, ແຕ່ຕ້ອງມີຜູ້ອຳນວຍການເຫັນດີຫລາຍກວ່າເຄິ່ງໜຶ່ງຂຶ້ນໄປ.

ກອງປະຊຸມສະພາບໍລິຫານແຕ່ລະຄັ້ງຕ້ອງມີບົດບັນທຶກ. ບົດບັນທຶກກອງປະຊຸມຂອງສະພາບໍລິຫານ ຕ້ອງເກັບຮັກສາໄວ້ໃນສຳນັກງານໃຫຍ່ ຂອງ ບໍລິສັດ.

ແລະສະເໜີໃຫ້ກອງປະຊຸມມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ແລະ/ຫຼື ບຸກຄົນທີ່ໄດ້ຮັບມອບໝາຍ ຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດໃນເລື່ອງດັ່ງກ່າວຂ້າງເທິງ ລວມທັງມີອຳນາດດັດແກ້ເນື້ອໃນກົດລະບຽບຂອງບໍລິສັດຕາມທີ່ເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ/ຫຼື ເຈົ້າໜ້າທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວມີຄຳແນະນຳ ແລະ/ຫຼື ຄຳສັ່ງໃຫ້ດັດແກ້.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນອະນຸມັດການດັດແກ້ເນື້ອໃນກົດລະບຽບ ຂອງ ບໍລິສັດ ລວມທັງການມອບອຳນາດດັ່ງກ່າວ.

ຫລັງຈາກ ຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 8 ແລ້ວ, ປະທານກອງປະຊຸມ ໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ໃຫ້ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້. ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ ຫຼື ຄຳເຫັນ.

ເວລາຕໍ່ມາ ເນື່ອງຈາກບໍ່ມີຜູ້ຖືຮຸ້ນທ່ານໃດ ມີຄຳຖາມອີກແລ້ວ, ປະທານກອງປະຊຸມສະເໜີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ,ໃນນີ້ ກອງປະຊຸມຈະຕ້ອງລົງມະຕິ ດ້ວຍຄະແນນສຽງຂອງຜູ້ຖືຮຸ້ນ ຫລື ຜູ້ຕາງໜ້າຜູ້ຖືຮຸ້ນຢ່າງໜ້ອຍສອງສ່ວນສາມ (2/3) ສ່ວນຮ້ອຍ ຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະມີຮຸ້ນລວມກັນຢ່າງໜ້ອຍແປດສິບ (80%) ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ຮັບຮອງການດັດແກ້ເນື້ອໃນກົດລະບຽບ ຂອງບໍລິສັດ, ລວມທັງການມອບອຳນາດໃຫ້ ຜູ້ອຳນວຍການໃຫຍ່ ທີ່ສະເໜີມາຂ້າງເທິງທຸກ ປະການ, ດ້ວຍຄະແນນຫຼາຍກວ່າສອງສ່ວນສາມ (2/3) ແລະ ຖືຮຸ້ນລວມກັນຫຼາຍກວ່າແປດ ສິບສ່ວນຮ້ອຍ (80%) ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ, ໂດຍມີຄະແນນ ສຽງດັ່ງນີ້:

(ກ) ຈຳນວນຄົນ (ສຽງ) ຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ:

1. ເຫັນດີ 669 ຄົນ (ສຽງ), ເທົ່າກັບ 100 ສ່ວນຮ້ອຍ ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງ ປະຊຸມ.

(ຂ) ຈຳນວນຮຸ້ນ (ສຽງ) ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ:

1. ເຫັນດີ 1.102.242.451 ຮຸ້ນ (ສຽງ), ເທົ່າກັບ 89,89 ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ ຖອກແລ້ວທັງໝົດຂອງບໍລິສັດ.

ວາລະທີ 9: ພິຈາລະນາ ແລະ ອະນຸມັດການເພີ່ມທຶນຈົດທະບຽນ ຂອງ ບໍລິສັດ

ຜູ້ອຳນວຍການໃຫຍ່ໄດ້ລາຍງານຕໍ່ທີ່ປະຊຸມຄື: ເພື່ອຂະຫຍາຍການລົງທຶນ ແລະ ການດຳເນີນທຸລະກິດ ຂອງ ບໍລິສັດ ແນໃສ່ສ້າງຄວາມຮັ່ງມີ ໃຫ້ແກ່ຜູ້ຖືຮຸ້ນຢ່າງຕໍ່ເນື່ອງ ແລະ ນັບມື້ນັບເພີ່ມຂຶ້ນດ້ວຍການຂະຫຍາຍກຳລັງການ ຜະລິດຂຶ້ນຕື່ມປະມານ 659,4 MW, ຕາມທີ່ໄດ້ສະເໜີໃນແຜນການດຳເນີນທຸລະກິດຂອງບໍລິສັດ ປີ 2015 ໃນວາລະ ທີ 3. ບໍລິສັດສະເໜີກອງປະຊຸມພິຈາລະນາອະນຸມັດການເພີ່ມທຶນຈົດທະບຽນ ຂອງ ບໍລິສັດ ໂດຍການອອກຮຸ້ນສາມັນ ໃໝ່ຈຳນວນບໍ່ເກີນ 464.783.334 ຮຸ້ນ, ມູນຄ່າກຳນົດ 4.000 ກີບຕໍ່ຮຸ້ນ ເພື່ອສະເໜີຂາຍໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ/ ຫຼື ຜູ້ຖືຮຸ້ນໂດຍສະເພາະເຈາະຈົງ ແລະ/ຫຼື ຂາຍໃຫ້ມວນຊົນທົ່ວໄປ. ຊຶ່ງຈຳນວນຮຸ້ນຂອງບໍລິສັດຈະເພີ່ມຂຶ້ນຈາກ 1.226.216.765 ຮຸ້ນ ເປັນ 1.690.985.099 ຮຸ້ນ.

- ຮຸ້ນສາມັນບໍ່ເກີນ 408.738.922 ຮຸ້ນ ສະເໜີຂາຍໃຫ້ກັບຜູ້ຖືຮຸ້ນເດີມ (Right Offering) ໃນອັດຕາສ່ວນ ການຈອງຊື້ເທົ່າກັບ 3 ຮຸ້ນເດີມຕໍ່ 1 ຮຸ້ນໃໝ່, ລາຄາບໍ່ຕ່ຳກວ່າ 6.000 ກີບຕໍ່ຮຸ້ນ ແລະ ຫາກມີຮຸ້ນທີ່ເຫລືອຈາກ ການຈອງຊື້ຕາມສິດຂອງຜູ້ຖືຮຸ້ນເດີມ ໃຫ້ຍົກຍອດເຫລືອ ເພື່ອຈັດສັນເພີ່ມຕື່ມໃຫ້ຜູ້ຖືຮຸ້ນເດີມລາຍອື່ນໆ ໃນລາ ຄາບໍ່ຕ່ຳກວ່າ 6.000 ກີບຕໍ່ຮຸ້ນ.
- ຮຸ້ນສາມັນບໍ່ເກີນ 56.029.412 ຮຸ້ນ ສະເໜີຂາຍໃຫ້ມວນຊົນທົ່ວໄປ (Public Offering) ໃນລາຄາບໍ່ຕ່ຳກວ່າ 6.800 ກີບຕໍ່ຮຸ້ນ.

ແລະສະເໜີກອງປະຊຸມມອບອຳນາດໃຫ້ສະພາບໍລິຫານ ແລະ/ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກ ບຸກຄົນດັ່ງກ່າວ ຄື:

(1) ເປັນຜູ້ມີອຳນາດໃນການພິຈາລະນາ ແລະ ກຳນົດທຶນຈົດທະບຽນ, ຈຳນວນຮຸ້ນເພີ້ມທຶນ ແລະ ລາຍ ລະອຽດທີ່ກ່ຽວຂ້ອງ, ດັດແກ້, ເພີ້ມເຕີມ, ຕີກລົງ, ປະຕິບັດ, ລົງນາມ, ສົ່ງມອບເອກະສານ ແລະ/ຫຼື ຂໍ້ມູນຕ່າງໆ ອັນຈຳ ເປັນແລະກ່ຽວເນື່ອງກັບການເພີ້ມທຶນຈົດທະບຽນຂອງບໍລິສັດ ລວມເຖິງແຕ່ບໍ່ຈຳກັດພຽງ ການເປີດເຜີຍຂໍ້ມູນໃດໜຶ່ງທີ່ ກ່ຽວຂ້ອງ, ການຕິດຕໍ່, ການໃຫ້ຂໍ້ຄວາມ, ຂໍ້ມູນແກ່ໜ່ວຍງານລັດ ແລະ/ຫຼື ອົງການລັດຕ່າງໆ ທີ່ກ່ຽວຂ້ອງ ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວ ຕະຫຼອດຈົນການກະກຽມ, ດັດແກ້, ເພີ້ມເຕີມ ແລະ/

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ຫຼື ປ່ຽນແປງຂໍ້ມູນທີ່ກ່ຽວຂ້ອງທີ່ຈະຕ້ອງເປີດເຜີຍ ລວມເຖິງການດຳເນີນການໃດໜຶ່ງທີ່ຈຳເປັນ ແລະ ກ່ຽວເນື່ອງກັບການດຳເນີນການດັ່ງກ່າວໄດ້ທຸກຢ່າງຈົນສຳເລັດ, ລວມທັງໃຫ້ມີອຳນາດໃນການແຕ່ງຕັ້ງ ແລະ/ຫຼື ຖອດຖອນຜູ້ຮັບມອບອຳນາດໃນການດຳເນີນການໃດໜຶ່ງດັ່ງກ່າວຂ້າງເທິງນີ້;

(2) ເປັນຜູ້ມີອຳນາດໃນການພິຈາລະນາ ແລະກຳນົດລາຍລະອຽດ ແລະເງື່ອນໄຂຕ່າງໆ ທີ່ຈຳເປັນ ຫຼື ກ່ຽວເນື່ອງກັບການສະເໜີຂາຍຮຸ້ນດັ່ງກ່າວໄດ້ທຸກປະການ ເຊັ່ນ: ກຳນົດວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການຈອງຊື້ຮຸ້ນສາມັນເພີ່ມທຶນ ໃນລາຄາທີ່ສະເໜີຂາຍຕາມຊັດສ່ວນການຖືຮຸ້ນ, ໄລຍະເວລາໃນການສະເໜີຂາຍ, ໄລຍະເວລາໃນການຈອງຊື້ຮຸ້ນ, ລວມເຖິງການແຕ່ງຕັ້ງທີ່ປຶກສາ ແລະ ການວ່າຈ້າງຜູ້ຈັດຈຳໜ່າຍ ແລະ ຜູ້ຮັບປະກັນການຂາຍຮຸ້ນ, ການປະຕິບັດ, ການລົງນາມ, ການສົ່ງມອບ ຄຳຮ້ອງຂໍອະນຸຍາດ, ໜັງສືຊວນຊື້, ສັນຍາ, ເອກະສານຕ່າງໆ ກັບສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບລາວ, ໜ່ວຍງານລັດຖະບານ ແລະ/ຫລື ອົງການຂອງລັດຫຼືບຸກຄົນໃດໜຶ່ງທີ່ກ່ຽວຂ້ອງກັບການສະເໜີຂາຍຮຸ້ນສາມັນເພີ່ມທຶນຄັ້ງນີ້ ເພື່ອດຳເນີນການດັ່ງກ່າວໄດ້ທຸກປະການ.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນອະນຸມັດການເພີ່ມທຶນຈົດທະບຽນຂອງບໍລິສັດ ລວມທັງການມອບອຳນາດດັ່ງກ່າວ.

ຫຼັງຈາກ ຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 9 ແລ້ວ, ປະທານກອງປະຊຸມ ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ໃຫ້ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້.

ຫຼັງຈາກກອງປະຊຸມໄດ້ພິຈາລະນາ ຄົບວາລະການປະຊຸມແລ້ວ, ປະທານກອງປະຊຸມ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນທ່ານໃດມີຄຳຖາມ ຫຼື ຂໍ້ສະເໜີຕ່າງໆ ສາມາດຖາມ ແລະ ສະເໜີໄດ້.

ມີຜູ້ຖືຮຸ້ນຊື່ ທ່ານ ສຸລະສິດ ມານາດີ ເປັນຜູ້ຖືຮຸ້ນມາປະຊຸມດ້ວຍຕົນເອງມີຄຳເຫັນ ແລະ ຄຳຖາມດັ່ງນີ້:

ຄຳເຫັນ ແລະ ຄຳຖາມ:

1) ສັງເກດເຫັນວ່າ ໃນປີ 2012 ບໍລິສັດໄດ້ເພີ່ມທຶນຄັ້ງໜຶ່ງ, ປີ 2014 ບໍລິສັດ ໄດ້ມີການກູ້ເງິນໂດຍການສະເໜີຂາຍຮຸ້ນກູ້ຢູ່ຕະຫລາດຫລັກຊັບແຫ່ງປະເທດໄທ, ຕາມທີ່ເຫັນໃນໃບລາຍງານຖານະການເງິນຂອງບໍລິສັດ ເຫັນວ່າມີເງິນຈຳນວນໜຶ່ງທີ່ບໍລິສັດໄດ້ເອົາລົງທຶນໃນໄລຍະສັ້ນ (ຝາກຢູ່ທະນາຄານ) ຊຶ່ງຜົນຕອບແທນບໍ່ສູງປານໃດ ແລະ ປັດຈຸບັນເຫັນວ່າບໍລິສັດມີເງິນສົດ ປະມານ 1.500 ຕື້ກີບ.

- ເປັນຫຍັງບໍລິສັດຈຶ່ງຈະອອກຮຸ້ນເພີ່ມທຶນອີກ, ທັງທີ່ອັດຕາໜີ້ຕໍ່ທຶນ (D/E) ຂອງບໍລິສັດຍັງຕ່ຳຢູ່ ແລະ ສາມາດກູ້ຢືມເງິນ ຫລື ສ້າງໜີ້ສິນໄດ້ອີກ?.
- ຖ້າບໍລິສັດອອກຮຸ້ນເພີ່ມທຶນຄັ້ງນີ້ສຳເລັດແລ້ວ ບໍລິສັດ ມີແຜນຈະຮັກສາອັດຕາສ່ວນໜີ້/ທຶນໄວ້ປະມານເທົ່າໃດ?. ແລະໃນໄລຍະ 3 ປີ ຫາ 5 ປີ ບໍລິສັດມີແຜນຈະຫຍາຍອີກຈັກໂຄງການ?.

ປະທານກອງປະຊຸມ ໄດ້ຊີ້ນຳໃຫ້ ຜູ້ອຳນວຍການໃຫຍ່ ເປັນຜູ້ໃຫ້ຄວາມກະຈ່າງແຈ້ງຕໍ່ຜູ້ຖືຮຸ້ນ, ມີລາຍລະອຽດດັ່ງນີ້:

ຄຳຕອບ:

1). ຜ່ານມາບໍລິສັດໄດ້ລະດົມທຶນໂດຍມີ 3 ແບບຄື: ແບບອອກຮຸ້ນກູ້, ແບບຢືມເງິນທະນາຄານ ແລະ ແບບອອກຮຸ້ນເພີ່ມທຶນ. ໃນປີ 2014 ບໍລິສັດໄດ້ອອກຮຸ້ນກູ້ຢູ່ປະເທດໄທ ຈຳນວນ 6.500 ລ້ານບາດ ຊຶ່ງບໍລິສັດໄດ້ໃຊ້

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ເງິນດັ່ງກ່າວຕາມເປົ້າໝາຍທີ່ວາງໄວ້ ຄື: ຮັບໂອນບັນດາໂຄງການທີ່ ຟຟລ ລົງທຶນ 100 ສ່ວນຮ້ອຍ ມີ 04 ໂຄງການຄື: ໂຄງການເຂື່ອນໄຟຟ້ານ້ຳສະນາ, ໂຄງການເຂື່ອນໄຟຟ້ານ້ຳຄານ 2 ແລະ ເຂື່ອນໄຟຟ້າຫວ້ຍລຳພັນໃຫຍ່ ແລະ ໂຄງການເຂື່ອນໄຟຟ້ານ້ຳຄານ 3, ຊຶ່ງປັດຈຸບັນໄດ້ມີການໄລ່ລຽງເພື່ອຈ່າຍເງິນໃນໂຄງການດັ່ງກ່າວ ແລະ ຮັບໂອນຮຸ້ນໃນໂຄງການທີ່ ຟຟລ ເຂົ້າຖືຮຸ້ນຈຳນວນໜຶ່ງ ເຊັ່ນ: ໂຄງການເຂື່ອນໄຟຟ້ານ້ຳລອງ, ເຂື່ອນໄຟຟ້ານ້ຳງື່ມ 5, ເຂື່ອນໄຟຟ້ານ້ຳອູ 2, ນ້ຳອູ 5 ແລະ ນ້ຳອູ 6, ລວມກຳລັງຕິດຕັ້ງ ປະມານ 392 ເມກາວັດ, ຊຶ່ງບໍລິສັດ ຈະໄດ້ໃຊ້ເງິນ ປະມານ 160 ລ້ານໂດລາສະຫະລັດ. ນອກຈາກນັ້ນບໍລິສັດຍັງໄດ້ໃຊ້ເງິນຈຳນວນໜຶ່ງໄປເຮັດ Refinance ເງິນກູ້ທີ່ມີດອກເບ້ຍສູງ ຂອງ ກະຊວງ ການເງິນ.

2). ໃນປີ 2015 ຕາມແຜນການລົງທຶນຂອງບໍລິສັດ ທີ່ໄດ້ລະບຸໄວ້ໃນວາລະທີ 3 ຂອງການປະຊຸມໃນມື້ນີ້ມີ ໂຄງການທີ່ ຟຟລ ເປັນເຈົ້າຂອງ ປະມານ 285 ເມກາວັດ ແລະ ໂຄງການທີ່ ຟຟລ ຖືຮຸ້ນມີປະມານ 374 ເມກາວັດ, ຊຶ່ງຈະເຮັດການເຕີບໂຕ ຂອງ ບໍລິສັດ ຫຼື ການຂະຫຍາຍກຳລັງຕິດຕັ້ງຮອດປີ 2020 ຈະເພີ່ມຂຶ້ນປະມານ 2.000 ເມກາວັດ.

3). ເງິນສົດປະມານ 1.500 ຕື້ກີບ ທີ່ສະແດງໃຫ້ເຫັນໃນໃບຖານະການເງິນ ຂອງ ບໍລິສັດ ປີ 2015 ນັ້ນ, ບໍລິສັດໄດ້ມີແຜນໃຊ້ຈ່າຍລະອຽດແລ້ວ ຄື : ຈະຮັບໂອນເອົາບັນດາໂຄງການຈາກ ຟຟລ ແລະ ເຂົ້າຮ່ວມຮຸ້ນໃນໂຄງການດັ່ງທີ່ໄດ້ກ່າວມາຂ້າງເທິງ.

4). ໃນອະນາຄົດຂ້າງໜ້າອັນໃກ້ໆນີ້ ບໍລິສັດຈະອອກຮຸ້ນເພີ່ມທຶນ ບໍລິສັດໄດ້ສຶກສາ, ພິຈາລະນາແລະ ຄົ້ນຄວ້າຢ່າງລະອຽດແລ້ວ ຮ່ວມກັບທີ່ປຶກສາ ໄດ້ພິຈາລະນາເຖິງສ່ວນໄດ້ສ່ວນເສຍຂອງຜູ້ຖືຮຸ້ນ ເຫັນວ່າມີຄວາມເໝາະສົມເປັນກາລະໂອກາດອັນດີ ທີ່ຈະອອກຮຸ້ນເພີ່ມທຶນຄັ້ງນີ້.

ເວລາຕໍ່ມາ ເນື່ອງຈາກບໍ່ມີຜູ້ຖືຮຸ້ນທ່ານໃດ ມີຄຳຖາມອີກແລ້ວ, ປະທານກອງປະຊຸມສະເໜີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາ ແລະ ອະນຸມັດການເພີ່ມທຶນຈົດທະບຽນຂອງບໍລິສັດ, ໃນນີ້ກອງປະຊຸມຈະຕ້ອງລົງມະຕິ ດ້ວຍຄະແນນສຽງຂອງຜູ້ຖືຮຸ້ນ ຫລື ຜູ້ຕາງໜ້າຜູ້ຖືຮຸ້ນຢ່າງໜ້ອຍສອງສ່ວນສາມ (2/3) ສ່ວນຮ້ອຍ ຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະ ມີຮຸ້ນລວມກັນຢ່າງໜ້ອຍແປດສິບ (80%) ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີອະນຸມັດການເພີ່ມທຶນຈົດທະບຽນຂອງ ບໍລິສັດ ລວມທັງການມອບອຳນາດທີ່ສະເໜີມາຂ້າງເທິງທຸກປະການ, ດ້ວຍຄະແນນຫຼາຍກວ່າ ສອງສ່ວນສາມ (2/3) ແລະ ຖືຮຸ້ນລວມກັນຫຼາຍກວ່າແປດສິບສ່ວນຮ້ອຍ (80%) ຂອງ ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ, ໂດຍມີຄະແນນສຽງດັ່ງນີ້:

(ກ) ຈຳນວນຄົນ (ສຽງ) ຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ:

1. ເຫັນດີ 668 ຄົນ (ສຽງ), ເທົ່າກັບ 99,85 ສ່ວນຮ້ອຍ ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.
2. ບໍ່ເຫັນດີ 1 ຄົນ (ສຽງ), ເທົ່າກັບ 0,15 ສ່ວນຮ້ອຍ ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ

(ຂ) ຈຳນວນຮຸ້ນ (ສຽງ) ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ :

1. ເຫັນດີ 1.101.990.429 ຮຸ້ນ (ສຽງ), ເທົ່າກັບ 89,87 ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.

2. ບໍ່ເຫັນດີ 252.022 ຮຸ້ນ (ສຽງ), ເທົ່າກັບ 0,021 ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ຫລັງຈາກນັ້ນ ປະທານໄດ້ແຈ້ງວ່າ ການພິຈາລະນາ ຂອງ ກອງປະຊຸມແມ່ນໄດ້ຄົບອາລະແລ້ວ, ຖ້າມີ ຜູ້ຖືຮຸ້ນທ່ານໄດ້ມີຄຳຖາມ ຫລື ຄຳເຫັນ ສາມາດຖາມໄດ້:

ມີຜູ້ຖືຮຸ້ນຊື່ ທ່ານ ສຸລະສິດ ມານາດີ ເປັນຜູ້ຖືຮຸ້ນມາປະຊຸມດ້ວຍຕົນເອງ ມີຄຳເຫັນ ແລະຄຳຖາມດັ່ງ ນີ້:

ຄຳຖາມ:

1) ໃນປີ 2015 ເປັນຫຍັງການຂະຫຍາຍກຳລັງການຕິດຕັ້ງ ຂອງບໍລິສັດ ຈຶ່ງຫຼຸດແຜນການປະມານ 24 ສ່ວນຮ້ອຍ ທຽບໃສ່ແຜນການການທີ່ໄດ້ລະບຸໄວ້ໃນໜັງສືຊວນຊື້ ຂອງບໍລິສັດໃນເວລາສ້າງຕັ້ງບໍລິສັດ. ແລະ ໃນປີ 2020 ບໍລິສັດມີແຜນຈະຂະຫຍາຍກຳລັງການຕິດຕັ້ງປະມານ 2.238 ເມກາວັດນັ້ນ ຈະປະຕິບັດໄດ້ແທ້ບໍ່ ? ຫລືຈະ ໄດ້ປະມານເທົ່າໃດ.

ປະທານກອງປະຊຸມ ໄດ້ຊີ້ນຳໃຫ້ ຜູ້ອຳນວຍການໃຫຍ່ ເປັນຜູ້ໃຫ້ຄວາມກະຈ່າງແຈ້ງຕໍ່ຜູ້ຖືຮຸ້ນ, ມີ ລາຍລະອຽດດັ່ງນີ້:

ຄຳຕອບ:

1). ໜັງສືຊວນຊື້ ຂອງ ບໍລິສັດໃນເວລາສ້າງຕັ້ງບໍລິສັດນັ້ນ ແມ່ນເປັນແຜນການດຳເນີນທຸລະກິດຂອງ ບໍລິສັດໄລຍະຍາວ, ຊຶ່ງຜູ້ບໍລິຫານລວມທັງພະນັກງານ ຂອງ ບໍລິສັດ ເວລາໃດກໍໄດ້ພະຍາຍາມປະຕິບັດໃຫ້ໄດ້ຕາມແຜນ ການ ຫຼື ລົ້ນແຜນການດັ່ງກ່າວ ແຕ່ວ່າໃນການປະຕິບັດຕົວຈິງ. ໃນປີ 2015 ຕາມແຜນການແມ່ນຈະປະຕິບັດໄດ້ ປະ ມານ 1.500 MW ນັ້ນ ປັດຈຸບັນບໍລິສັດກຳລັງດຳເນີນການເຂົ້າຖືຮຸ້ນແລະກຳລັງດຳເນີນການກໍ່ສ້າງ, ແຕ່ການຮັບໂອນ, ການເຂົ້າຫາແຫຼ່ງທຶນ, ການດຳເນີນເອກະສານທາງດ້ານນິຕິກຳແລະອື່ນໆ ແມ່ນຂຶ້ນກັບຫລາຍປັດໃຈສົມຄວນ ເປັນຕົ້ນ ສະພາບແວດ ລ້ອມຂອງການດຳເນີນງານ, ສະພາບຂອງໂລກແລະອື່ນໆອີກ, ແຕ່ຄາດວ່າ ໃນປີ 2020 ຖ້າສະພາບເອື້ອ ອຳນວຍ ບໍລິສັດ ອາດຈະຂະຫຍາຍກຳລັງຕິດຕັ້ງລົ້ນແຜນການທີ່ວາງໄວ້ກໍອາດຈະເປັນໄດ້.

ໃນຕອນທ້າຍຂອງການປະຊຸມ ປະທານກອງປະຊຸມ ໄດ້ແຈ້ງໃຫ້ທີ່ປະຊຸມຊາບກ່ຽວກັບຈຳນວນຜູ້ຖື ຮຸ້ນທີ່ເຂົ້າຮ່ວມກອງປະຊຸມຮອດເວລາປິດກອງປະຊຸມ, ມີຈຳນວນຜູ້ຖືຮຸ້ນເຂົ້າຮ່ວມປະຊຸມດ້ວຍຕົນເອງມີຈຳນວນ 195 ທ່ານ ແລະ ມີຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນຜູ້ຖືຮຸ້ນຈຳນວນ 474 ທ່ານ ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ 669 ຄົນ ຖືຮຸ້ນລວມກັນ 1.102.242.451 ຮຸ້ນ ລວມກັນທັງໝົດເທົ່າກັບ 89,89 ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ ຖອກແລ້ວທັງໝົດຂອງບໍລິສັດ.

ແລະປະທານກອງປະຊຸມ ໄດ້ກ່າວຄຳຂອບໃຈບັນດາທ່ານຜູ້ຖືຮຸ້ນທຸກທ່ານ ທີ່ໄດ້ມາຮ່ວມກອງປະຊຸມ ໃນມື້ນີ້ ແລະ ຂໍເຊີນທ່ານເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2015 ໃນຕົ້ນປີ 2016 ແລະ ອວຍພອນໄຊ ບັນດາທ່ານສະພາບໍລິຫານບໍລິສັດ, ຈົ່ງມີສຸຂະພາບເຂັ້ມແຂງ ປະສົບຜົນສຳເລັດໃນໜ້າທີ່ວຽກງານ, ອວຍພອນໄຊຜູ້ຖື ຮຸ້ນທຸກທ່ານ ແລະ ແຂກທີ່ມີກຽດທຸກທ່ານ ຈົ່ງມີສຸຂະພາບເຂັ້ມແຂງ ປະສົບຜົນສຳເລັດໃນໜ້າທີ່ວຽກງານທຸກປະການ.

ກອງປະຊຸມໄດ້ພິຈາລະນາຄົບຖ້ວນຕາມວາລະກອງປະຊຸມແລ້ວ, ບໍ່ມີເລື່ອງໃດທີ່ຈະພິຈາລະນາຕື່ມ, ປະທານກອງປະຊຸມ ໄດ້ກ່າວປິດກອງປະຊຸມເວລາ 17:00ໂມງ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ປະທານກອງປະຊຸມ



ດຣ. ຄຳມະນີ ອິນທິລາດ

ຮັບຮອງຖືກຕ້ອງ

ບຸນອຸ້ມ ສີວັນເພັງ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ລາຍງານການເງິນປະຈຳປີ 2015

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

	ບິດ ອະທິບາຍ	31 ທັນວາ 2015 ລ້ານກີບ	31 ທັນວາ 2014 ລ້ານກີບ
ຊັບສິນ			
ຊັບສິນບໍ່ໝຸນວຽນ			
ເງິນລົງທຶນໃນວິສາຫະກິດຂາຮຸ້ນ	5	710.598	610.357
ເງິນລົງທຶນໃນ ບໍລິສັດ ຮຸ້ນສ່ວນ	5	1.558.324	1.498.609
ເງິນລົງທຶນຈ່າຍລ່ວງໜ້າ	6	3.690.647	779.005
ຊັບສິນທີ່ຢູ່ພາຍໃຕ້ການສຳປະທານ, ສຸດທິ	7	4.342.731	4.145.851
ຊັບສິນຄົງທີ່ທີ່ບໍ່ມີຕົວຕົນ	8	787	-
ເງິນຝາກກັບສະຖາບັນການເງິນ ເພື່ອເປັນ ຫຼັກຊັບຄ้ำປະກັນ	14	38.704	-
ຊັບສິນບໍ່ໝຸນວຽນອື່ນໆ		7.953	1.885
ລວມຊັບສິນບໍ່ໝຸນວຽນ		10.349.744	7.035.707
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	9	1.213.770	1.251.534
ເງິນລົງທຶນໄລຍະສັ້ນ	10	20.000	20.000
ໜີ້ຕ້ອງຮັບຈາກລູກຄ้າ ແລະ ໜີ້ຕ້ອງຮັບອື່ນໆ	11	373.684	502.382
ເຄື່ອງໃນສາງ, ສຸດທິ		4.088	4.043
ຊັບສິນໝຸນວຽນອື່ນໆ		7.086	7.595
ລວມຊັບສິນໝຸນວຽນ		1.618.628	1.785.554
ລວມຍອດຊັບສິນ		11.968.372	8.821.261

ທ່ານ ບຸນອຸ້ມ ສີວັນເພັ່ງ
ຜູ້ອຳນວຍການໃຫຍ່
ວັນທີ: 28 MAR 2016

ທ່ານ ບຸນສະຫຼອງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 28 MAR 2016

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ์: www.edlgen.com.la

	ບົດ ອະທິບາຍ	31 ທັນວາ 2015 ລ້ານກີບ	31 ທັນວາ 2014 ລ້ານກີບ
ທຶນ			
ທຶນຕົນເອງ			
ຮຸ້ນທຶນ/ທຶນຈົດທະບຽນ	12	6.717.215	4.904.867
ສ່ວນເພີ່ມມູນຄ່າຮຸ້ນ	12	985.621	142.229
ຄັງສະສົມຕາມລະບຽບການ	13	361.294	297.210
ຜົດຕ່າງຂອງການແປງຄ່າເອກະສານລາຍງານການເງິນ		(2.119)	(1.476)
ກຳໄລສະສົມ		1.042.217	978.811
ລວມຍອດທຶນ		**9.104.228**	**6.321.641**
ໜີ້ສິນ			
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວ, ສຸດທິ	14	841.457	499.263
ຮຸ້ນກູ້, ສຸດທິ	15	1.452.163	1.575.862
ໜີ້ຕ້ອງຈ່າຍ ຂອງສັນຍາ SWAP, ສຸດທິ	16	161.397	11.105
ລວມໜີ້ສິນບໍ່ໝຸນວຽນ		**2.455.017**	**2.086.230**
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງຜູ້ສະໜອງ		130.940	174.589
ເງິນກູ້ຢືມໄລຍະຍາວ ເຖິງກຳນົດຈັດເປັນໄລຍະສັ້ນ	14	178.007	99.519
ໜີ້ຕ້ອງສົ່ງອື່ນໆ	17	91.818	134.936
ໜີ້ຕ້ອງສົ່ງອາກອນລາຍໄດ້	18	8.200	4.306
ໜີ້ສິນໝຸນວຽນອື່ນໆ		162	40
ລວມໜີ້ສິນໝຸນວຽນ		**409.127**	**413.390**
ລວມຍອດໜີ້ສິນ		**2.864.144**	**2.499.620**
ລວມຍອດທຶນ ແລະ ໜີ້ສິນ		**11.968.372**	**8.821.261**

ທ່ານ ບຸນອຸ້ມ ສີວັນເພັ່ງ
ຜູ້ອຳນວຍການໃຫຍ່
ວັນທີ: 28 MAR 2016

ທ່ານ ບຸນສະຫຼອງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 28 MAR 2016

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

	ບິດ ອະທິບາຍ	31 ທັນວາ 2015 ລ້ານກີບ	31 ທັນວາ 2014 ລ້ານກີບ
ຂາຍ		847.759	839.193
ຕົ້ນທຶນໃນການຂາຍ	19	(276.443)	(215.613)
ກຳໄລ		571.316	623.580
ລາຍຮັບອື່ນໆ		16.198	5.680
ລາຍຈ່າຍໃນການດຳເນີນງານ ແລະ ຄ່າບໍລິຫານ	19	(121.027)	(123.528)
ກຳໄລ/(ຂາດທຶນ) ອັດຕາແລກປ່ຽນ, ສຸດທິ		(9.975)	(18.098)
ລາຍຈ່າຍດອກເບ້ຍ	20	(61.937)	(31.722)
ກຳໄລຂອງຮຸ້ນຂອງເງິນລົງທຶນໃນ ວິສາຫະກິດຂາຮຸ້ນ ແລະ ບໍລິສັດ ຮຸ້ນສ່ວນ	5	286.218	474.467
ກຳໄລ ກ່ອນອາກອນກຳໄລ		680.793	930.379
ອາກອນກຳໄລ	21	(39.954)	(22.695)
ກຳໄລສຸດທິສຳລັບປີ		**640.839**	**907.684**
ກຳໄລຕໍ່ຮຸ້ນ			
ກຳໄລພື້ນຖານຕໍ່ຮຸ້ນ	22	456,44	740,36

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ທ່ານ ບຸນອຸ້ມ ສີວັນເພັ ງ
ຜູ້ອຳນວຍການໃຫຍ່
ວັນທີ: 28 MAR 2016

ທ່ານ ບຸນສະຫງວ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ລາຍງານການເງິນ
ວັນທີ: 28 MAR 2016

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ, ເລກທີ 2392, ໜ່ວຍ 3, ບ້ານຫົ້ວຄາ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປ ລາວ. ໂທ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ
ໃບລາຍງານສ່ວນປ່ຽນແປງທຶນຕົນເອງ ຂອງຜູ້ຖືຮຸ້ນ
ສຳລັບປີ ສິ້ນສຸດ ວັນທີ 31 ທັນວາ 2015

		ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2015					
	ບົດອະທິບາຍ	ຮຸ້ນທຶນ/ທຶນຈົດທະບຽນ (ບົດອະທິບາຍ 12) ລ້ານກີບ	ສ່ວນເພີ່ມມູນຄ່າຮຸ້ນ (ບົດອະທິບາຍ 12) ລ້ານກີບ	ຄັງສະສົມຕາມລະບຽບການ (ບົດອະທິບາຍ 13) ລ້ານກີບ	ຜົດຕ່າງຈາກການແປງຄ່າ ເອກະສານລາຍງານການເງິນ ລ້ານກີບ	ກຳໄລ ສ້ຳແບ່ງປັນ ລ້ານກີບ	ລວມ ລ້ານກີບ
ຍອດ ວັນທີ 1 ມັງກອນ 2015		4.904.867	142.229	297.210	(1.476)	978.811	6.321.641
ກຳໄລສຸດທິ ໃນຮອບເວລາລາຍງານ		-	-	-	-	640.839	640.839
ການອອກຮຸ້ນເພີ່ມທຶນ	12	1.812.348	843.392	-	-	-	2.655.740
ຜົດຕ່າງຈາກການແປງຄ່າເອກະສານ ລາຍງານການເງິນ		-	-	-	(643)	-	(643)
ຈ່າຍເງິນປັນຜົນ	23	-	-	-	-	(513.349)	(513.349)
ໂອນເຂົ້າຄັງສະສົມ	13	-	-	64.084	-	(64.084)	-
ຍອດ ວັນທີ 31 ທັນວາ 2015		6.717.215	985.621	361.294	(2.119)	1.042.217	9.104.228

		ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2014					
	ບົດອະທິບາຍ	ຮຸ້ນທຶນ/ທຶນຈົດທະບຽນ (ບົດອະທິບາຍ 12) ລ້ານກີບ	ສ່ວນເພີ່ມມູນຄ່າຮຸ້ນ (ບົດອະທິບາຍ 12) ລ້ານກີບ	ຄັງສະສົມຕາມລະບຽບການ (ບົດອະທິບາຍ 13) ລ້ານກີບ	ຜົດຕ່າງຈາກການແປງຄ່າ ເອກະສານລາຍງານການເງິນ ລ້ານກີບ	ກຳໄລ ສ້ຳແບ່ງປັນ ລ້ານກີບ	ລວມ ລ້ານກີບ
ຍອດ ວັນທີ 1 ມັງກອນ 2014		4.904.867	142.229	206.442	7.001	744.348	6.004.887
ກຳໄລສຸດທິ ໃນຮອບເວລາລາຍງານ		-	-	-	-	907.684	907.684
ຜົດຕ່າງຈາກການແປງຄ່າເອກະສານ ລາຍງານການເງິນ		-	-	-	(8.477)	-	(8.477)
ຈ່າຍເງິນປັນຜົນ	23	-	-	-	-	(582.453)	(582.453)
ໂອນເຂົ້າຄັງສະສົມ	13	-	-	90.768	-	(90.768)	-
ຍອດ ວັນທີ 31 ທັນວາ 2014		4.904.867	142.229	297.210	(1.476)	978.811	6.321.641

ທ່ານ ບຸນອຸ້ມ ສີວັນເພັ້ງ
ຜູ້ອຳນວຍການໃຫຍ່
ວັນທີ: 28 MAR 2016

ທ່ານ ບຸນສະໜອງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ລາຍງານການເງິນ
ວັນທີ: 28 MAR 2016

	ບົດອະທິບາຍ	31 ທັນວາ 2015 ລ້ານກີບ	31 ທັນວາ 2014 ລ້ານກີບ
ກະແສເງິນສົດ ຈາກກິດຈະກຳການດຳເນີນງານ			
ກຳໄລກ່ອນອາກອນກຳໄລໃນປີ		680.793	930.379
ປັບປຸງ			
ຄ່າສູນເສຍມູນຄ່າ		3.943	222
ຫັກຄ່າຫຼ້ຍຫ້ຽນ	7	225.442	181.555
(ກຳໄລ)/ຂາດທຶນ ຈາກອັດຕາແລກປ່ຽນ		26.973	(11.555)
ກຳໄລຮຸ້ນ ຈາກເງິນລົງທຶນ	5	(286.218)	(474.467)
ລາຍຈ່າຍການເງິນ	20	61.937	31.722
ກະແສເງິນສົດຈາກ ການດຳເນີນງານກ່ອນການປ່ຽນແປງຂອງທຶນໝຸນວຽນ		712.870	657.856
ການປ່ຽນແປງຈາກ ການດຳເນີນງານ ຊັບສິນ ແລະ ໜີ້ສິນ			
- ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ		131.953	16.973
- ເຄື່ອງໃນສາງ		(45)	(1.021)
- ຊັບສິນໝຸນວຽນອື່ນໆ		509	(1.691)
- ຊັບສິນບໍ່ໝຸນວຽນອື່ນໆ		(6.068)	1.579
- ໜີ້ຕ້ອງສົ່ງ		32.891	(30.373)
- ໜີ້ສິນໝຸນວຽນອື່ນໆ		122	(18.767)
- ໜີ້ຄ້າງຈ່າຍ		(34.218)	50.934
ກະແສເງິນສົດທີ່ເກີດຈາກການດຳເນີນງານ		838.014	675.490
ອາກອນກຳໄລທີ່ໄດ້ຈ່າຍ	18	(36.060)	(27.668)
ເງິນສົດສຸດທິ ຈາກກິດຈະກຳ ການດຳເນີນງານ		801.954	647.822
ກະແສເງິນສົດ ຈາກກິດຈະກຳ ການລົງທຶນ			
ຈ່າຍລ່ວງໜ້າສຳລັບເງິນລົງທຶນ	6	(2.991.664)	(304.594)
ຮັບເງິນຈາກເງິນລົງທຶນໃນ ບໍລິສັດ ຮຸ້ນສ່ວນ	5	13.021	-
ຊື້ຊັບສິນບັດພາຍໃຕ້ສັນຍາສຳປະທານ		(498.862)	(142.162)
ຊື້ຊັບສິນບັດຄົງທີ່ບໍ່ມີຕົວຕົນ	8	(787)	-
ຊື້ເງິນລົງທຶນໄລຍະສັ້ນ, ສຸດທິ	10	(20.000)	(20.000)
ຮັບເງິນຄືນຈາກເງິນລົງທຶນໄລຍະສັ້ນ, ສຸດທິ	10	20.000	20.000
ຮັບເງິນປັນຜົນ	5	189.366	227.016
ເງິນສົດ ສຸດທິ ທີ່ໃຊ້ໃນກິດຈະກຳການລົງທຶນ		(3.288.926)	(219.740)

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

	ບົດ ອະທິບາຍ	31 ທັນວາ 2015 ລ້ານກີບ	31 ທັນວາ 2014 ລ້ານກີບ
ກະແສເງິນສົດຈາກກິດຈະກຳການເງິນ			
ການເພີ່ມຂອງເງິນກູ້ຢືມໄລຍະຍາວ	14	555.198	-
ຈ່າຍເງິນກູ້ຢືມໄລຍະຍາວ	14	(138.365)	(333.145)
ຮັບເງິນຈາກເງິນກູ້ຢືມໄລຍະສັ້ນ		-	160.000
ຈ່າຍເງິນກູ້ຢືມໄລຍະສັ້ນ		-	(160.000)
ຮັບເງິນຈາກຮຸ້ນກູ້		-	1.616.810
ຕົ້ນທຶນການອອກຮຸ້ນກູ້		(16.936)	(17.734)
ຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ	23	(385.012)	(436.840)
ຈ່າຍເງິນປັນຜົນໃຫ້ ຂາຮຸ້ນອື່ນ	23	(128.337)	(145.613)
ຮັບເງິນຈາກການອອກຮຸ້ນສາມັນ	12	2.655.740	-
ຈ່າຍເງິນເພື່ອເປັນຫຼັກຊັບຄ້ຳປະກັນ	14	(38.704)	-
ຈ່າຍດອກເບ້ຍ		(53.901)	(30.733)
ເງິນສົດສຸດທິ ຈາກກິດຈະກຳການເງິນ		2.449.683	652.745
ການຫຼຸດລົງສຸດທິ ໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		(37.289)	1.080.827
ເງິນສົດ ແລະ ລາຍການທຽບເທົ່າເງິນສົດຕົ້ນປີ		1.251.534	159.914
ຜົນຂອງອັດຕາແລກປ່ຽນ ປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		(475)	10.793
ເງິນສົດ ແລະ ລາຍການທຽບເທົ່າເງິນສົດທ້າຍປີ	9	1.213.770	1.251.534
ລາຍການບໍ່ແມ່ນເງິນສົດ			
ໜີ້ສິນອື່ນ ສ່ວນຂອງການຊື້ຊັບສິນບັດພາຍໃຕ້ສັນຍາສຳປະທານ	7	97.595	174.135
ເຈ້ຳໜີ້ຖືກຕັ້ງໜີ້ຄ່ຳໃຊ້ຈ່າຍໃນການອອກຮຸ້ນກູ້		-	16.936

ທ່ານ ບຸນອຸ້ມ ສີວັນເພັງ
ຜູ້ອຳນວຍການໃຫຍ່
ວັນທີ: 28 MAR 2016

ທ່ານ ບຸນສະຫງວ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 28 MAR 2016

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ຊື່ອະປະຫວັດຫຍໍ້ຂອງຄະນະສະພາບໍລິຫານ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ຊີວະປະຫວັດຫຍໍ້ຂອງ ທ່ານ ດຣ ຄຳມະນີ ອິນທິລາດ

